# ສະຫະພັນບານເຕະແຫ່ງຊາດລາວ

# ກົດລະບຽບ

ສະບັບ ວັນທີ 19 ທັນວາ 2020

# ສາລະບານ


ພາກທີ I. ວ່າດ້ວຍບົດບັນຍັດທົ່ວໄປ

ມາດຕາ 1-10

ພາກທີ II. ວ່າດ້ວຍການເປັນສະມາຊິກ

ມາດຕາ 11-21

ພາກທີ III. ວ່າດ້ວຍປະທານກິດຕິມະສັກ ແລະ ສະມາຊິກກິດຕິມະສັກ

ມາດຕາ 22

ພາກທີ IV. ວ່າດ້ວຍໂຄງຮ່າງການຈັດຕັ້ງ

ມາດຕາ 23-55

ພາກທີ V. ວ່າດ້ວຍຄະນະກຳມະການອິດສະຫຼະ

ມາດຕາ 58-61

ພາກທີ VI. ວ່າດ້ວຍມາດຕະການທາງດ້ານວິໄນ

ມາດຕາ 62

ພາກທີ VII. ວ່າດ້ວຍຄະນະກຳມະການແກ້ໄຂຂໍ້ຂັດແຍ້ງ

ມາດຕາ 63-65

ພາກທີ VIII. ວ່າດ້ວຍການເງິນ

ມາດຕາ 66-72

ພາກທີ IX. ວ່າດ້ວຍລາຍການການແຂ່ງຂັນ ແລະ ສິດໃນລາຍການການແຂ່ງຂັນ ແລະ ກິດຈະກຳຕ່າງໆຢູ່ພາຍໃນປະເທດ

ມາດຕາ 73-76

## ພາກທີ X. ວ່າດ້ວຍການແຂ່ງຂັນ ແລະ ລາຍການການແຂ່ງຂັນລະຫວ່າງປະເທດ

ມາດຕາ 77–79

## ພາກທີ XI. ວ່າດ້ວຍບົດບັນຍັດສຸດທ້າຍ

ມາດຕາ 80–81

## ຄຳນິຍາມ

ບັນດາຄຳສັບທີ່ກຳນົດໄວ້ຂ້າງລຸ່ມນີ້ ແມ່ນມີຄວາມໝາຍດັ່ງນີ້:

**ສຕລ**: ສະຫະພັນບານເຕະແຫ່ງຊາດລາວ.

**FIFA:** ສະຫະພັນບານເຕະນາໆຊາດ.

**AFC:** ສະຫະພັນບານເຕະອາຊີ.

**AFF**: ສະຫະພັນບານເຕະອາຊຽນ.

**IFAB:** ຄະນະກຳມະການກິລາບານເຕະນາໆຊາດ.

**CAS** (Court of Arbitration for Sports): ສານອະນຸຍາໂຕຕຸລາການເພື່ອການກິລາໂລກ ຕັ້ງຢູ່ ເມືອງໂລຊານ ປະເທດສະວິດເຊີແລນ.

**ສະຫະພັນບານເຕະແຫ່ງຊາດລາວ:** ສະຫະພັນກິລາບານເຕະທີ່ໄດ້ຖືກຮັບຮອງໂດຍ FIFA. ສະຫະພັນດັ່ງກ່າວ ແມ່ນສະມາຊິກຂອງ FIFA, ເວັ້ນເສຍແຕ່ ມີການກຳນົດຄວາມໝາຍໄວ້ຕ່າງຫາກ.

**ສະຫະພັນບານເຕະແຂວງ:** ແມ່ນອົງການຈັດຕັ້ງທີ່ຂຶ້ນກັບສະຫະພັນບານເຕະແຫ່ງຊາດລາວ.

**ສະຫະພັນບານເຕະລະດັບທະວີບ:** ແມ່ນກຸ່ມຂອງບັນດາສະຫະພັນບານເຕະແຫ່ງຊາດ ທີ່ຖືກຮັບຮອງ ໂດຍ FIFA ທີ່ຢູ່ໃນທະວີບດຽວກັນ (ຫຼື ພາກພື້ນດຽວກັນ).

**ສະໂມສອນ:** ແມ່ນສະມາຊິກຂອງສະຫະພັນບານເຕະແຫ່ງຊາດລາວ ຫຼື ທີ່ໄດ້ຮັບການຮັບຮອງໂດຍ ສຕລ.

**ບັນດາເຈົ້າໜ້າທີ່:** ແມ່ນສະມາຊິກຂອງຄະນະກຳມະການ (ລວມທັງບັນດາສະມາຊິກຂອງຄະນະບໍລິຫານງານ), ສະມາຊິກຄະນະກຳມະການ, ກຳມະການຕັດສິນ ແລະ ຜູ້ຊ່ວຍກຳມະການຕັດສິນ, ຫົວໜ້າຄູຝຶກ (coach), ຜູ້ຝຶກສອນ (trainer) ແລະ ບຸກຄົນອື່ນໆ ທີ່ຮັບຜິດຊອບວຽກງານທາງດ້ານເຕັກນິກວິທະຍາ, ການແພດ ແລະ ວຽກບໍລິຫານໃນ FIFA, ສະຫະພັນບານເຕະລະດັບທະວີບ, ສະຫະພັນບານເຕະແຫ່ງຊາດ, ສະໂມສອນບານເຕະ ແລະ ບຸກຄົນອື່ນໆ ທີ່ມີພັນທະປະຕິບັດຕາມ ກົດລະບຽບ FIFA (ຍົກເວັ້ນ ນັກກິລາບານເຕະ ແລະ ຕົວແທນນັກກິລາ ບານເຕະ).

**ກິລາບານເຕະ:** ກິລາບານເຕະ 11 ຄົນ, ຟຸດຊໍ ແລະ ຫາດຊາຍ.

**ນັກກິລາບານເຕະ:** ນັກກິລາບານເຕະທີ່ໄດ້ຮັບອະນຸຍາດ ຈາກ ສຕລ.

**ກອງປະຊຸມໃຫຍ່:** ການຈັດຕັ້ງສູງສຸດ ຂອງ ສຕລ.

**ຄະນະບໍລິຫານງານ:** ການບໍລິຫານຂອງ ສຕລ.

**ສະມາຊິກ ສຕລ:** ນິຕິບຸກຄົນ ທີ່ໄດ້ຮັບການຮັບຮອງໃຫ້ເປັນສະມາຊິກຂອງ ສຕລ ຈາກກອງປະຊຸມໃຫຍ່.

**ຜູ້ແທນ:** ບຸກຄົນທີ່ຕາງໜ້າ ຢ່າງຖືກຕ້ອງໃຫ້ແກ່ສະມາຊິກ ໃນກອງປະຊຸມໃຫຍ່ ຂອງ ສຕລ.

**ກິລາບານເຕະຂອງສະຫະພັນບານເຕະແຫ່ງຊາດ:** ກິລາບານເຕະທີ່ຄວບຄຸມໂດຍ FIFA ແລະ ຈັດຂຶ້ນໂດຍ FIFA, ບັນດາສະຫະພັນຕ່າງໆ ແລະ/ຫຼື ສະຫະພັນທີ່ເປັນສະມາຊິກ ຕາມກະຕິກາກິລາບານເຕະ (Laws of the Game).

**ກະຕິກາກິລາບານເຕະ:** ກະຕິກາກິລາບານເຕະ ທີ່ວາງອອກໂດຍ IFAB ຕາມກົດລະບຽບຂອງ FIFA.

**ສານທົ່ວໄປ:** ສານຂອງລັດທີ່ພິຈະລະນາຂໍ້ຂັດແຍ່ງທາງດ້ານກົດໝາຍຂອງລັດ ແລະ ເອກະຊົນ.

**ຄະນະກຳມະການຕັດສິນແກ້ໄຂຂໍ້ຂັດແຍ້ງອິດສະຫຼະ:** ສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ແລະ ເປັນເອກະລາດ ທີ່ຖືກຮັບຮອງໂດຍ ສຕລ ທີ່ເຮັດໜ້າທີ່ແທນສານທົ່ວໄປ.

# ພາກທີ I

# ວ່າດ້ວຍບົດບັນຍັດທົ່ວໄປ

## ມາດຕາ 1 ວ່າດ້ວຍສະຖານະພາບຕາມກົດໝາຍ, ສໍານັກງານໃຫ່ຍ ແລະ ເຄື່ອງໝາຍການຄ້າ

1. ສຕລ ແມ່ນອົງການຈັດຕັ້ງມະຫາຊົນ ທີ່ບໍ່ສະແຫວງຫາຜົນກໍາໄລ, ໄດ້ຮັບການສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ແລະ ຄົງຕົວຕະຫຼອດໄປ.
2. ສໍານັກງານໃຫຍ່ ຂອງ ສຕລ ຕັ້ງຢູ່ບ້ານ ຫ້ວຍຫົງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ໄປສະນີ: 1800 ແລະ ອາດຈະຍ້າຍໄປຍັງສະຖານທີ່ໃໝ່ ຕາມມະຕິຕົກລົງທີ່ໄດ້ຜ່ານ ກອງປະຊຸມໃຫ່ຍເທົ່ານັ້ນ.
3. ສຕລ ແມ່ນສະມາຊິກຂອງ FIFA, AFC ແລະ AFF.
4. ກາສັນຍາລັກຂອງສຕລ ມີ ທຸງຊາດລາວ, ພະທາດຫຼວງ, ໝາກບານ ໂດຍມີ ພື້ນຫຼັງເປັນສີເຫຼືອງ.
5. ຕົວອັກສອນຫຍໍ້ຂອງ ສະຫະພັນບານເຕະແຫ່ງຊາດລາວ ເປັນພາສາລາວແມ່ນ ສຕລ ແລະ ເປັນພາສາອັງກິດ ແມ່ນ Lao Football Federation ມີອັກສອນຫຍໍ້ແມ່ນ LFF.
6. ກາສັນຍາລັກ ແລະ ຕົວອັກສອນຫຍໍ້ ແມ່ນໄດ້ຈົດທະບຽນຢ່າງຖືກຕ້ອງ ຕາມກົດໝາຍນໍາກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

## ມາດຕາ 2 ວ່າດ້ວຍວັດຖຸປະສົງ

ວັດຖຸປະສົງ ຂອງ ສຕລ ແມ່ນ:

ກ) ເພື່ອພັດທະນາກິລາບານເຕະ ໂດຍເນັ້ນໃສ່ ອະນຸຊົນ, ເຍົາວະຊົນ ແລະ ຊາວໜຸ່ມ ຍິງ-ຊາຍ;

ຂ) ເພື່ອຈັດລາຍການແຂ່ງຂັນກິລາບານເຕະ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມຕໍ່ເນື່ອງໂດຍອີງຕາມເງື່ອນໄຂຕົວຈິງໃນແຕ່ລະໄລຍະ; ພ້ອມກັນນັ້ນ ກໍ່ສົ່ງເສີມ, ວາງລະບຽບ ແລະ ຄວບຄຸມ ການແຂ່ງຂັນ

ກິລາບານເຕະໃນ ສປປ ລາວ ຢ່າງຍຸຕິທຳ ໂດຍຄຳນຶງເຖິງການເປັນນ້ຳໜຶ່ງໃຈດຽວກັນ, ຄຸນຄ່າທາງດ້ານການສຶກສາ, ວັດທະນະທຳ-ສັງຄົມ;

ຄ) ເພື່ອປົກປ້ອງ ຜົນປະໂຫຍດຂອງສະມາຊິກ ສຕລ;

ງ) ເພື່ອເປັນບ່ອນອີງໃນການຈັດຕັ້ງເຄື່ອນໄຫວວຽກງານ ຂອງ ສຕລ ໂດຍໃຫ້ສອດຄ່ອງຕາມຂໍ້ກຳນົດໃນກົດລະບຽບສະບັບນີ້ ເວັ້ນຈາກການລະເມີດ ກົດລະບຽບສະບັບນີ້, ລະບຽບການຕ່າງໆຂອງ ສຕລ, ຄຳຊີ້ນຳ ແລະ ຄຳຕັດສິນຂອງ FIFA, AFC, AFF, ກົດລະບຽບການແຂ່ງຂັນ ເພື່ອຮັບປະກັນວ່າ ຂໍ້ກຳນົດນີ້ແມ່ນຈະໄດ້ຮັບການເຄົາລົບ ໂດຍສະມາຊິກ ສຕລ;

ຈ) ເພື່ອ ສົ່ງເສີມຄວາມສາມັກຄີຮັກແພງ, ເປັນນ້ຳໜຶ່ງໃຈດຽວ, ມີຈັນຍາບັນ ໃນການຫຼິ້ນກິລາບານເຕະຕາມລະບຽບ ແລະ ຂໍ້ກຳນົດການແຂ່ງຂັນ ແລະ ເປັນການປ້ອງກັນ ເພື່ອບໍ່ໃຫ້ເກີດມີ ການຮັບສິນບົນ-ການໃຫ້ສິນບົນ, ການນຳໃຊ້ສານກະຕຸ້ນ;

ສ) ເພື່ອ ສົ່ງເສີມ ແລະ ພັດທະນາ ກິລາບານເຕະຍິງ ແລະ ສົ່ງເສີມການເຂົ້າຮ່ວມການແຂ່ງຂັນຂອງເພດຍິງເຂົ້າໃນ ລາຍການແຂ່ງຂັນກິລາບານເຕະທຸກລະດັບ ທີ່ຢູ່ພາຍໃຕ້ ການຄຸ້ມຄອງ ຂອງ ສຕລ;

ຊ) ເພື່ອ ຄວບຄຸມ ແລະ ຄຸ້ມຄອງ ການແຂ່ງຂັນກິລາບານເຕະມິດຕະພາບ ທຸກໆຄັ້ງເຊັ່ນ: ຕາມຕາຕະລາງການແຂ່ງຂັນຂອງ FIFA, AFC, AFF, ການແຂ່ງຂັນລະດັບສະໂມສອນລະຫວ່າງປະເທດ ທີ່ແຂ່ງຂັນ ໃນ ສປປ ລາວ;

ຍ) ເພື່ອ ຄວບຄຸມ ແລະ ຄຸ້ມຄອງ ກິລາບານເຕະສິບເອັດ (11) ຄົນ, ກິລາບານເຕະຟຸດຊໍ ແລະ ກິລາບານເຕະຫາດຊາຍ ໃນລາຍການແຂ່ງຂັນລະດັບຊາດ ແລະ ລະດັບນາໆຊາດ ທີ່ມີການແຂ່ງຂັນໃນທຸກຮູບແບບໃນ ສປປ ລາວ ໂດຍໃຫ້ສອດຄ່ອງຕາມ ກົດລະບຽບ ແລະ ລະບຽບການຕ່າງໆ ຂອງການແຂ່ງຂັນທີ່ FIFA, AFC, AFF ກຳນົດໄວ້ໃຫ້ສະຫະພັນຕ່າງໆ;

ດ) ເພື່ອ ພົວພັນທາງດ້ານກິລາບານເຕະ ລະຫວ່າງປະເທດ ກ່ຽວກັບ ກິລາບານເຕະສິບເອັດ 11 ຄົນ, ກິລາບານເຕະຟຸດຊໍ ແລະ ກິລາບານເຕະຫາດຊາຍ;

ຕ) ເພື່ອ ເປັນເຈົ້າພາບຈັດການແຂ່ງຂັນກິລາບານເຕະ ໃນລະດັບຊາດ ແລະ ລະດັບສາກົນ ຕາມເງື່ອນໄຂຕົວຈິງໃນແຕ່ລະໄລຍະ;

ຖ) ຈັດຫາເງິນທຶນ ເພື່ອສະໜອງໃຫ້ແກ່ການຈັດຕັ້ງສ້າງກິດຈະກຳຕ່າງໆ ແລະ ການບໍລິຫານຂອງ ສຕລ;

ທ) ເພື່ອ ຊື້, ຖືຄອງ ຫຼື ໄດ້ອະສັງຫາລິມະຊັບ ຫຼື ຜົນປະໂຫຍດໃດໜຶ່ງ ມາດ້ວຍວິທີການອື່ນໆ ທີ່ຈະເປັນຜົນປະໂຫຍດ ຂອງ ສຕລ ຫຼື ວາງແຜນ ເພື່ອສົ່ງເສີມ ຫຼື ຊ່ວຍເຫຼືອ ໃນການສົ່ງເສີມວັດຖຸປະສົງຕ່າງໆ ຂອງ ສຕລ;

ນ) ເພື່ອ ນຳໃຊ້ກອງທຶນຂອງ ສຕລ ເຂົ້າໃນກິດຈະກຳທາງເສດຖະກິດໃຫ້ເກີດຜົນປະໂຫຍດ ເພື່ອບັນລຸວັດຖຸປະສົງ ຂອງ ສຕລ ຕາມທີ່ກຳນົດໄວ້ຂ້າງເທິງ ໃນມາດຕານີ້;

## ມາດຕາ 3 ວ່າດ້ວຍສິດທິມະນຸດ

ສຕລ ເຄົາລົບສິດທິມະນຸດ ຕາມລະບຽບກົດໝາຍຂອງ ສປປ ລາວ ແລະ ຫຼັກການສາກົນທີ່ ສປປ ລາວ ເປັນພາຄີ.

## ມາດຕາ 4 ວ່າດ້ວຍການບໍ່ແບ່ງແຍກ, ຄວາມເທົ່າທຽມ, ແລະ ການຕ້ານການຈຳແນກເຊື້ອຊາດ

ການຈຳແນກ ບໍ່ວ່າຮູບການໃດ ກ່ຽວກັບ ປະເທດ, ບຸກຄົນ ຫຼື ກຸ່ມຄົນ ເນື່ອງຈາກ ເຊື້ອຊາດ, ສີຜິວ, ຊົນເຜົ່າ, ຊາດກຳເນີດ ຫຼື ສັງຄົມ, ເພດ, ຄວາມພິການ, ພາສາ, ສາດສະໜາ, ຄວາມຄິດເຫັນທາງການເມືອງ ຫຼື ເຫດຜົນອື່ນໆ, ຄວາມລ້ຳລວຍ, ການເກີດ ຫຼື ສະຖານະພາບອື່ນໆ, ລົດສະນິຍົມທາງເພດ ຫຼື ເຫດຜົນອື່ນໆ ແມ່ນຖືກຫ້າມຢ່າງເຄັ່ງຄັດ ແລະ ຈະຖືກລົງວິໄນ ໂດຍການໂຈະ ຫຼື ໄລ່ອອກ ແລະ/ຫຼື ປະຕິບັດມາດຕະການ ລະບຽບວິໄນຕ່າງໆ.

## ມາດຕາ 5 ວ່າດ້ວຍຄວາມເປັນກາງ ແລະ ຄວາມເປັນອິດສະຫຼະ

1. ສຕລ ແມ່ນຕ້ອງມີທ່າທີເປັນກາງທາງດ້ານການເມືອງ ແລະ ທາງດ້ານສາດສະໜາ.

2. ສະມາຊິກຂອງ ສຕລ ຕ້ອງເປັນກາງທາງດ້ານການເມືອງ ແລະ ສາດສະໜາ.

3. ສຕລ ຕ້ອງມີຄວາມເປັນເອກະລາດ ແລະ ຕ້ອງຫຼີກລ້ຽງ ທຸກຮູບການທີ່ບໍ່ເໝາະສົມ ທີ່ເປັນການແຊກແຊງການເມືອງ. ສຕລ ຕ້ອງຄຸ້ມຄອງ ວຽກງານພາຍໃນຂອງຕົນ ຢ່າງເປັນອິດສະຫຼະ ແລະ ຈະບໍ່ຖືກແຊກແຊງວຽກງານພາຍໃນຂອງຕົນ ຈາກ ບຸກຄົນທີສາມ.

## ມາດຕາ 6 ວ່າດ້ວຍການສົ່ງເສີມ ການພົວພັນແບບເປັນມິດ

1. ສຕລ ສົ່ງເສີມ ການພົວພັນແບບເປັນມິດ ລະຫວ່າງບັນດາ ສະມາຊິກ, ສະໂມສອນ, ເຈົ້າໜ້າທີ່ ແລະ ນັກກິລາບານເຕະ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງ ສຕລ ແລະ ໃນສັງຄົມ.

2. ສຕລ ເປັນສູນກາງຊ່ວຍແກ້ໄຂຂໍ້ຂັດແຍ່ງພາຍໃນທີ່ອາດຈະເກີດຂຶ້ນ ລະຫວ່າງບັນດາ ສະມາຊິກ, ສະໂມສອນ, ເຈົ້າໜ້າທີ່ ແລະ ນັກກິລາບານເຕະ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງ ສຕລ.

## ມາດຕາ 7 ວ່າດ້ວຍນັກກິລາບານເຕະ

1. ສະຖານະພາບຂອງນັກກິລາບານເຕະ ແລະ ຂໍ້ກຳນົດໃນການໂອນນັກກິລາບານເຕະ ປະຕິບັດຕາມກົດລະບຽບ ຂອງ FIFA ວ່າດ້ວຍສະຖານະພາບ ແລະ ການໂອນຍ້າຍນັກເຕະ ຕາມທີ່ໄດ້ດັດແກ້ ໂດຍ FIFA ໃນແຕ່ລະໄລຍະ.

2. ນັກກິລາບານເຕະ ຕ້ອງໄດ້ຂຶ້ນທະບຽນ ຕາມລະບຽບໃນແຕ່ລະລາຍການແຂ່ງຂັນທີ່ຢູ່ພາຍໃຕ້ການຄວບຄຸມ ແລະ ຄຸ້ມຄອງຂອງ ສຕລ.

## ມາດຕາ 8 ວ່າດ້ວຍກະຕິກາກິລາບານເຕະ (Laws of the Game)

1. ກະຕິກາກິລາບານເຕະສິບເອັດ (11) ຄົນ ແມ່ນອີງຕາມຂໍ້ກຳນົດ ຂອງ IFAB ແລະ ຂອງ ສຕລ ທີ່ວາງອອກຕາມສະພາບຕົວຈິງຂອງລາຍການແຂ່ງຂັນໃນແຕ່ລະໄລຍະ ເຊິ່ງສະມາຊິກຂອງ ສຕລ ຕ້ອງໄດ້ປະຕິບັດຕາມ.

2. ກະຕິກາກິລາບານເຕະຟຸດຊໍ ແມ່ນອີງຕາມຂໍ້ກຳນົດຂອງ FIFA ແລະ ຂອງ ສຕລ ທີ່ວາງອອກຕາມສະພາບຕົວຈິງຂອງລາຍການແຂ່ງຂັນໃນແຕ່ລະໄລຍະ ເຊິ່ງສະມາຊິກຂອງ ສຕລ ຕ້ອງໄດ້ປະຕິບັດຕາມ.

3. ກະຕິກາກິລາບານເຕະຫາດຊາຍ ແມ່ນອີງຕາມຂໍ້ກຳນົດຂອງ FIFA ແລະ ຂອງ ສຕລ ທີ່ວາງອອກຕາມສະພາບຕົວຈິງຂອງລາຍການແຂ່ງຂັນໃນແຕ່ລະໄລຍະ ເຊິ່ງສະມາຊິກຂອງ ສຕລ ຕ້ອງໄດ້ປະຕິບັດຕາມ.

## ມາດຕາ 9 ວ່າດ້ວຍການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່

1. ເຈົ້າໜ້າທີ່ຂອງ ສຕລ ທັງໝົດຕ້ອງປະຕິບັດຕາມກົດລະບຽບສະບັບນີ້, ລະບຽບການຕ່າງໆ, ຄຳຊີ້ນຳຂອງ ສຕລ; ຄຳຕັດສິນ ແລະ ກົດຈັນຍາບັນຂອງ FIFA, AFC ແລະ AFF ໃນການເຄື່ອນໄຫວກິດຈະກຳຂອງຕົນ.

2. ເຈົ້າໜ້າທີ່ ແລະ ບຸກຄົນ, ນິຕິບຸກຄົນ ທີ່ເຂົ້າຮ່ວມໃນການແຂ່ງຂັນກິລາບານເຕະ ໃນລາຍການແຂ່ງຂັນທີ່ຈັດຂຶ້ນໂດຍ ສຕລ ແລະ/ຫຼື FIFA, AFC, AFF ໃນ ສປປ ລາວ ແມ່ນມີພັນທະປະຕິບັດຕາມກົດລະບຽບ, ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ແລະ ຫຼັກການ ການຫຼິ້ນຢ່າງຍຸຕິທຳ (Fair Play) ແລະ ຫຼັກການຄວາມຊື່ສັດ, ຄວາມໂປ່ງໃສ ແລະ ຄວາມມີນ້ຳໃຈນັກກິລາ.

## ມາດຕາ 10 ວ່າດ້ວຍພາສາທາງການ

1. ພາສາທາງການຂອງ ສຕລ ແມ່ນ ພາສາລາວ. ສຳລັບການພົວພັນວຽກງານກັບຕ່າງປະເທດ ແມ່ນນຳໃຊ້ພາສາອັງກິດ.

2. ພາສາເປັນທາງການ ໃນກອງປະຊຸມໃຫຍ່ຂອງ ສຕລ ແມ່ນນຳໃຊ້ ພາສາລາວ.

## ພາກທີ II

## ວ່າດ້ວຍການເປັນສະມາຊິກ ສຕລ

### ມາດຕາ 11 ວ່າດ້ວຍສະມາຊິກ ສຕລ

ສະມາຊິກຂອງ ສຕລ ປະກອບມີ:

ກ) ສະໂມສອນທີ່ເປັນສະມາຊິກສົມບູນຂອງ ສຕລ ທີ່ໄດ້ເຂົ້າຮ່ວມການແຂ່ງຂັນລະດັບສູງສຸດ.

ຂ) ສະຫະພັນບານເຕະ ນະຄອນຫຼວງ ແລະ ແຂວງ ໃນທົ່ວປະເທດ.

ຄ) ບຸກຄົນທີ່ມີປະສົບການບໍລິຫານອົງກາງານ ສຕລ ໂດຍໄລຍະຜ່ານມາເຄີຍຖືກແຕ່ງຕັ້ງເປັນຄະນະຮັບຜິດຊອບອົງກາງານຂອງ ສຕລ ໃນໄລຍະ 4 ປີຕິດຕໍ່ກັນ.

### ມາດຕາ 12 ວ່າດ້ວຍການຮັບ, ການໂຈະ ແລະ ປົດຈາກການເປັນສະມາຊິກ ສຕລ

1. ການຮັບເອົາ, ການໂຈະ ແລະ ການປົດຈາກການເປັນສະມາຊິກຂອງ ສຕລ ແມ່ນກອງປະຊຸມໃຫຍ່ເປັນຜູ້ຕັດສິນ.

2. ການຮັບເອົາຜູ້ສະໝັກເຂົ້າເປັນສະມາຊິກຂອງ ສຕລ ແມ່ນສາມາດເຮັດຂຶ້ນໄດ້ ຖ້າຫາກຜູ້ສະໝັກຍິນດີປະຕິບັດຕາມຂໍ້ກຳນົດ, ລະບຽບ ໂດຍອີງຕາມກົດລະບຽບ ຂອງ ສຕລ ຢ່າງຄົບຖ້ວນ ແລະ ຖືກຕ້ອງ.

3. ການຍຸດຕິເປັນສະມາຊິກ ຂອງ ສຕລ ສາມາດປະຕິບັດໄດ້ ໂດຍ ການລາອອກ ຫຼື ການຖືກປົດ. ສະມາຊິກຂອງ ສຕລ ທີ່ຖືກຍຸດຕິ ແມ່ນຈະຖືກຍົກເລີກສິດທັງໝົດທີ່ກ່ຽວຂ້ອງກັບ ສຕລ, ໂດຍທີ່ ສະມາຊິກຜູ້ນັ້ນ ຕ້ອງໄດ້ຊຳລະພັນທະທາງດ້ານການເງິນ ທີ່ມີຕໍ່ ສຕລ ຫຼື ສະມາຊິກອື່ນໆ ຂອງ ສຕລ ໃຫ້ສຳເລັດ.

4. ກອງປະຊຸມໃຫຍ່ ສຕລ ຕ້ອງມີຜູ້ເຂົ້າຮ່ວມ ຊຶ່ງມາຈາກສະມາຊິກຂອງ ສຕລ ຫຼື ຜູ້ຕາງໜ້າຂອງສະມາຊິກ ສຕລ ທີ່ໄດ້ຮັບມອບໝາຍດ້ວຍລາຍລັກອັກສອນ.

## ມາດຕາ 13 ວ່າດ້ວຍເງື່ອນໄຂເຂົ້າເປັນສະມາຊິກ ສຕລ

ຜູ້ທີ່ມີຈຸດປະສົງສະໝັກເຂົ້າເປັນສະມາຊິກຂອງ ສຕລ ຕ້ອງປະຕິບັດຕາມເງື່ອນໄຂລຸ່ມນີ້:

1. ຕ້ອງໄດ້ຂຽນຄໍາຮ້ອງ ສົ່ງໃຫ້ຫ້ອງການຂອງ ສຕລ.
2. ຄໍາຮ້ອງ ຕ້ອງປະກອບດ້ວຍເອກະສານດັ່ງລຸ່ມນີ້:

   - ຜູ້ທີ່ມີຈຸດປະສົງສະໝັກເຂົ້າເປັນສະມາຊິກຂອງ ສຕລ (ສະຫະພັນບານເຕະແຂວງ, ນະຄອນຫຼວງ ແລະ ສະໂມສອນ) ຕ້ອງໄດ້ຂຽນຄໍາຮ້ອງ ແລະ ປະກອບເອກະສານດັ່ງລຸ່ມນີ້:

ກ) ສໍາເນົາກົດລະບຽບ ແລະ ລະບຽບການຕ່າງໆຂອງສະໂມສອນ ແລະ ສະຫະພັນ;

ຂ) ໜັງສືຢັ້ງຢືນວ່າ ຕົນເອງມີທີ່ຢູ່ ໃນ ສປປ ລາວ ແລະ ໄດ້ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

ຄ) ໜັງສືປະຕິຍານຕົນ ຈະລົງແຂ່ງຂັນທຸກລາຍການແຂ່ງຂັນຢ່າງເປັນທາງການ ທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບທີ່ ສຕລ ໄດ້ຕົກລົງ;

ງ) ບັນຊີລາຍຊື່ເຈົ້າໜ້າທີ່ ຜູ້ທີ່ມີສິດໃນການລົງລາຍເຊັນໃນບັນດານິຕິກໍາຕ່າງໆຂອງອົງກອນ;

ຈ) ສໍາເນົາບົດບັນທຶກກອງປະຊຸມໃຫຍ່ຄັ້ງຫຼ້າສຸດ ຫຼື ກອງປະຊຸມສ້າງຕັ້ງ ນິຕິບຸກຄົນ ຂອງຕົນ;

ສ) ລາຍຊື່ນັກກິລາບານເຕະທັງໝົດ ທີ່ສະໂມສອນໄດ້ວ່າຈ້າງ;

ຊ) ໜັງສືຮັບຮອງວ່າ ຈະສະໜອງນັກກິລາບານເຕະຂອງຕົນໃຫ້ແກ່ທີມຊາດ ເມື່ອ ສຕລ ຕ້ອງການເພື່ອຮັບໃຊ້ປະເທດຊາດ;

ຍ) ຕ້ອງໄດ້ຈ່າຍຄ່າທໍານຽມລົງທະບຽນ ໃນເວລາຍື່ນຄໍາຮ້ອງຂໍເປັນສະມາຊິກ;

ດ) ມາດຕານີ້ ບໍ່ໄດ້ສົ່ງຜົນກະທົບຕໍ່ສະຖານະພາບຂອງສະມາຊິກໃນປະຈຸບັນ.

   - ບຸກຄົນທີ່ມີປະສົບການບໍລິຫານງານໃນ ສຕລ ຕ້ອງປະກອບເອກະສານດັ່ງນີ້:

ກ) ສໍາເນົາໃບແຕ່ງຕັ້ງຂອງ ສຕລ, AFF, AFC, FIFA ໃນການປະຕິບັດໜ້າທີ່ວຽກງານກ່ຽວກັບກິລາບານເຕະ;

ຂ) ສໍາເນົາບັດປະຈໍາຕົວປະຊາຊົນລາວ ຫຼື ປຶ້ມສໍາມະໂນຄົວ;

ຄ) ໃບແຈ້ງໂທດນໍາເບີ 3 ຈາກສານ;

### ມາດຕາ 14 ວ່າດ້ວຍຂັ້ນຕອນພິຈາລະນາຄໍາຮ້ອງຂອງຜູ້ສະໝັກ

1. ຄະນະບໍລິຫານງານ ສຕລ ເປັນຜູ້ນໍາສະເໜີຄໍາຮ້ອງຂອງຜູ້ສະໝັກໃຫ້ກອງປະຊຸມໃຫຍ່ຕົກລົງ.
2. ພາຍຫຼັງກອງປະຊຸມໃຫຍ່ ຕົກລົງແລ້ວ ຕ້ອງໄດ້ຈັດພິທີຮັບເອົາສະມາຊິກໃໝ່ໃນເວລາອັນຄວນ.

### ມາດຕາ 15 ວ່າດ້ວຍສິດຂອງບັນດາສະມາຊິກ

1. ສະມາຊິກຂອງ ສຕລ ມີສິດດັ່ງລຸ່ມນີ້:

ກ) ມີສິດເຂົ້າຮ່ວມໃນກອງປະຊຸມໃຫຍ່ຂອງ ສຕລ;

ຂ) ມີສິດສະເໜີຄໍາເຫັນ ຕໍ່ວາລະຂອງກອງປະຊຸມໃຫຍ່;

ຄ) ມີສິດສະເໜີຕົວແທນຂອງຕົນ ເຂົ້າໃນອະນຸກໍາມະການໃດໜຶ່ງ ຂອງ ສຕລ;

ງ) ມີສິດລົງຄະແນນສຽງ ແລະ ສະໝັກຮັບເລືອກຕັ້ງ;

ຈ) ມີສິດໄດ້ຮັບແຈ້ງການກ່ຽວກັບວຽກງານຂອງ ສຕລ ໂດຍຜ່ານໜ່ວຍງານຈັດຕັ້ງທາງການຂອງ ສຕລ;

ສ) ມີສິດເຂົ້າຮ່ວມໃນການແຂ່ງຂັນ (ຖ້າມີ) ແລະ/ຫຼື ກິດຈະກໍາທາງກິລາຕ່າງໆ ທີ່ຈັດຂຶ້ນ ໂດຍ ສຕລ;

ຊ) ປະຕິບັດສິດອື່ນໆ ທັງໝົດທີ່ເກີດຂຶ້ນ ຈາກກົດລະບຽບ, ຂໍ້ກໍານົດ ແລະ ລະບຽບການຕ່າງໆຂອງ ສຕລ.

## ມາດຕາ 16 ວ່າດ້ວຍພັນທະຂອງບັນດາສະມາຊິກຂອງ ສຕລ

1. ພັນທະຂອງບັນດາສະມາຊິກຂອງ ສຕລ ມີດັ່ງລຸ່ມນີ້:

ກ) ຕ້ອງເຄົາລົບ ແລະ ປະຕິບັດຕາມ ກົດລະບຽບ, ຂໍ້ກຳນົດ, ລະບຽບການຕ່າງໆ, ຄຳຊີ້ນຳ ແລະ ຄຳຕັດສິນຂອງ FIFA, AFC, AFF ແລະ ສຕລ ທັງໝົດຢ່າງເຂັ້ມງວດ;

ຂ) ຕ້ອງສ້າງຕັ້ງອົງການຈັດຕັ້ງຂອງຕົນຂຶ້ນ ໂດຍມາຈາກການເລືອກຕັ້ງຕາມລະບຽບພາຍໃນ ສະໂມສອນຂອງຕົນ;

ຄ) ຕ້ອງເຂົ້າຮ່ວມ ໃນການແຂ່ງຂັນ ແລະ ກິດຈະກຳທາງກິລາບານເຕະອື່ນໆ ທີ່ຈັດຂຶ້ນ ໂດຍ ສຕລ, AFF, AFC ແລະ FIFA;

ງ) ຕ້ອງຈ່າຍຄ່າການເປັນສະມາຊິກຂອງຕົນຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມກຳນົດເວລາ;

ຈ) ຮັບປະກັນວ່າ ບັນດາສະມາຊິກຂອງຕົນ ຈະປະຕິບັດຕາມ ກົດລະບຽບ, ຂໍ້ກຳນົດ, ລະບຽບການ, ຄຳຊີ້ນຳ ແລະ ຄຳຕັດສິນ ຂອງ FIFA, AFC, AFF ແລະ ສຕລ;

ສ) ເຄົາລົບ ແລະ ປະຕິບັດ ກະຕິກາກິລາບານເຕະ ທີ່ກຳນົດໂດຍ IFAB ແລະ FIFA ຢ່າງເຄັ່ງຄັດ;

ຊ) ຮັບຮອງເອົາກົດລະບຽບ, ຂໍ້ກຳນົດ ແລະ ລະບຽບການຕ່າງໆຂອງ ສຕລ, AFF, AFC, FIFA ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງພາຍໃນສະໂມສອນຕົນເອງ ຫຼື ກັບບັນດາສະມາຊິກດ້ວຍກັນ ແລະ ກັບຕ່າງປະເທດ;

ຍ) ບໍລິຫານຈັດການວຽກງານຂອງຕົນ ຢ່າງເປັນເອກະລາດ ແລະ ຮັບປະກັນວ່າ ວຽກງານຂອງຕົນ ຈະບໍ່ຖືກແຊກແຊງ ຈາກບຸກຄົນທີ່ສາມ ຕາມມາດຕາ 20 ຂອງກົດລະບຽບສະບັບນີ້;

ດ) ຮັບປະກັນວ່າ ອົງການຈັດຕັ້ງຂອງຕົນຈະຖືກ ເລືອກຕັ້ງ ຫຼື ແຕ່ງຕັ້ງ ຕາມຂັ້ນຕອນ ທີ່ຮັບຮອງວ່າໄດ້ສຳເລັດ ການເລືອກຕັ້ງ ຫຼື ການແຕ່ງຕັ້ງ ຢ່າງເປັນເອກະລາດ;

ຕ) ແຈ້ງໃຫ້ ສຕລ ຊາບກ່ຽວກັບ ການດັດແກ້ ກົດລະບຽບ ແລະ ລະບຽບການຕ່າງໆ ຂອງຕົນ ແລະ ລາຍຊື່ ເຈົ້າໜ້າທີ່ ຫຼື ບຸກຄົນອື່ນໆຂອງຕົນ ຜູ້ທີ່ມີສິດອຳນາດໃນການລົງລາຍເຊັນ ໂດຍມີສິດເຊັນສັນຍາ ໃຫ້ມີຜົນຜູກພັນທາງດ້ານກົດໝາຍ ກັບ ບຸກຄົນທີສາມ;

ຖ) ຫ້າມພົວພັນ ທາງດ້ານກິລາບານເຕະ ກັບ ບຸກຄົນ, ນິຕິບຸກຄົນ ຫຼື ສະມາຊິກ ທີ່ຖືກລົງວິໄນ;

ທ) ປະຕິບັດຕາມຫຼັກການ ຄວາມຊື່ສັດສຸດຈະລິດ, ເປັນອັນໜຶ່ງອັນດຽວ ແລະ ການປະພຶດທີ່ດີທາງດ້ານກິລາ ຕາມບົດບັນຍັດຂອງ ກົດລະບຽບ;

ນ) ປະຕິບັດຂໍ້ກຳນົດ ທີ່ລະບຸໄວ້ ໃນມາດຕາ 13;

ບ) ລາຍງານຢ່າງເປັນປະຈຳ ຖ້າຫາກມີການປ່ຽນແປງຂອງສະມາຊິກພາຍໃນສະໂມສອນ;

ປ) ອະນຸມັດກົດລະບຽບຂອງຕົນ ຕາມກົດລະບຽບຂອງ ສຕລ;

ຜ) ຕ້ອງຂໍອະນຸຍາດຈາກ ສຕລ ກ່ອນຈະມີການຈັດການແຂ່ງຂັນ ຫຼື ການເຂົ້າຮ່ວມການແຂ່ງຂັນ.

2. ສະມາຊິກໃດ ທີ່ລະເມີດພັນທະທີ່ກ່າວມາ ຂ້າງເທິງນີ້ ຈະຖືກລົງວິໄນ ຕາມສະຖານໜັກ ຫຼື ເບົາ ທີ່ກຳນົດໄວ້ ໃນກົດລະບຽບສະບັບນີ້.

## ມາດຕາ 17 ວ່າດ້ວຍການສິ້ນສຸດລົງຂອງສະມາຊິກກະພາບ

1. ມີແຕ່ກອງປະຊຸມໃຫຍ່ ສຕລ ເທົ່ານັ້ນ ທີ່ສາມາດຮັບຮອງ ການສິ້ນສຸດລົງຂອງສະມາຊິກກະພາບ. ເຖິງຢ່າງໃດກໍຕາມ, ຄະນະບໍລິຫານງານ ສຕລ ມີສິດຢຸດສະມາຊິກກະພາບຊົ່ວຄາວໄດ້ ສຳລັບສະມາຊິກໃດທີ່ລະເມີດ ພັນທະຂອງຕົນຢ່າງຮ້າຍແຮງ ແລະ/ຫຼື ຫຼາຍຄັ້ງ ໂດຍມີຜົນສັກສິດໃນທັນໃດ.

2. ກອງປະຊຸມໃຫຍ່ ທີ່ຮັບຮອງການສິ້ນສຸດລົງຂອງສະມາຊິກກະພາບ ຕ້ອງມີຕົວແທນສະມາຊິກເຂົ້າຮ່ວມຢ່າງໜ້ອຍສາມສ່ວນສີ່ (3/4). ການຮັບຮອງການສິ້ນສຸດລົງຂອງສະມາຊິກກະພາບ ຕ້ອງໄດ້ຮັບຄະແນນສຽງ ສາມສ່ວນສີ່ (3/4) ຂອງຕົວແທນສະມາຊິກທີ່ເຂົ້າຮ່ວມກອງປະຊຸມໃຫຍ່ນັ້ນ.

   ກອງປະຊຸມຄະນະບໍລິຫານງານ ສຕລ ທີ່ຮັບຮອງການສິ້ນສຸດລົງຂອງສະມາຊິກກະພາບຊົ່ວຄາວ ຕ້ອງມີຄະນະບໍລິຫານງານ ສຕລ ເຂົ້າຮ່ວມຢ່າງໜ້ອຍສາມສ່ວນສີ່ (3/4). ການຮັບຮອງການສິ້ນສຸດລົງຂອງສະມາຊິກກະພາບຊົ່ວຄາວ ຕ້ອງໄດ້ຮັບຄະແນນສຽງ ສາມສ່ວນສີ່ (3/4) ຂອງຄະນະບໍລິຫານງານ ສຕລ ທີ່ເຂົ້າຮ່ວມກອງປະຊຸມນັ້ນ.

3. ສະມາຊິກໃດ ເມື່ອສິ້ນສຸດສະມາຊິກກະພາບແລ້ວ ແມ່ນເສຍສິດໃນການເປັນສະມາຊິກຂອງຕົນ. ບໍ່ອະນຸຍາດໃຫ້ສະມາຊິກອື່ນໆ ພົວພັນວຽກງານທາງດ້ານກິລາບານເຕະກັບຜູ້ກ່ຽວ.

4. ສຳລັບສະມາຊິກ ສຕລ ທີ່ເປັນສະໂມສອນກິລາບານເຕະ ທີ່ບໍ່ເຂົ້າຮ່ວມການແຂ່ງຂັນຂອງ ສຕລ ເປັນເວລາ 1 ປີ ແມ່ນບໍ່ມີສິດລົງຄະແນນສຽງ ໃນກອງປະຊຸມໃຫຍ່ ສຕລ ແລະ ຜູ້ຕາງໜ້າຂອງ

ສະໂມສອນດັ່ງກ່າວ ກໍ່ຈະບໍ່ຖືກເລືອກຕັ້ງ ຫຼື ແຕ່ງຕັ້ງ ເປັນກໍາມະການຂອງຄະນະບໍລິຫານງານ ສຕລ ຈົນກວ່າ ພວກກ່ຽວປະຕິບັດພັນທະຢ່າງຄົບຖ້ວນ.

## ມາດຕາ 18 ວ່າດ້ວຍການຍົກເລີກສະມາຊິກກະພາບ

1. ກອງປະຊຸມໃຫຍ່ ສຕລ ສາມາດຍົກເລີກສະມາຊິກກະພາບໄດ້ ໃນກໍລະນີດັ່ງຕໍ່ໄປນີ້:

   ກ) ສະມາຊິກທີ່ບໍ່ປະຕິບັດພັນທະທາງດ້ານການເງິນ ແລະ ຄ່າປັບໄໝຕ່າງໆ ຕາມລະບຽບການທີ່ກ່ຽວຂ້ອງກັບການແຂ່ງຂັນ ຫຼື ຂອງ ສຕລ;

   ຂ) ສະມາຊິກ ທີ່ລະເມີດ ກົດລະບຽບ, ຂໍ້ກໍານົດ, ລະບຽບການຕ່າງໆ, ຄໍາຊີ້ນໍາ ແລະ ຄໍາຕັດສິນຂອງ FIFA, AFC, AFF ແລະ ສຕລ;

2. ກອງປະຊຸມໃຫຍ່ ສຕລ ຕ້ອງມີຄະແນນສຽງຕາມທີ່ລະບຸໄວ້ໃນມາດຕາ 17 ຂໍ້ 2.

## ມາດຕາ 19 ວ່າດ້ວຍການລາອອກ

1. ສະມາຊິກໃດ ທີ່ປະສົງຈະລາອອກ ຈາກ ສຕລ ຕ້ອງສົ່ງເອກະສານແຈ້ງເຈດຈໍານົງເປັນລາຍລັກອັກສອນຫາ ເລຂາທິການ ສຕລ ບໍ່ໃຫ້ຫຼຸດ ສາມ (3) ເດືອນ ກ່ອນສິ້ນສຸດປີປະຕິທິນ.

2. ການລາອອກ ຈະມີຜົນສັກສິດກໍ່ຕໍ່ເມື່ອສະມາຊິກທີ່ມີຈຸດປະສົງລາອອກນັ້ນ ຕ້ອງໄດ້ປະຕິບັດພັນທະທາງດ້ານການເງິນ ແລະ ໜີ້ສິນຕ່າງໆຂອງຕົນ ຕໍ່ ສຕລ ແລະ ສະມາຊິກອື່ນໆຂອງ ສຕລ ຢ່າງຄົບຖ້ວນ.

## ມາດຕາ 20 ວ່າດ້ວຍຄວາມເປັນເຈົ້າຕົນເອງຂອງ ສຕລ ແລະ ສະມາຊິກຂອງຕົນ

1. ສຕລ ແລະ ແຕ່ລະສະມາຊິກຂອງ ສຕລ ບໍລິຫານຈັດການວຽກງານຂອງຕົນ ໂດຍຄວາມເປັນເຈົ້າຕົນເອງປາສະຈາກການແຊກແຊງ ຈາກພາຍນອກ.

2. ອົງການຈັດຕັ້ງທີ່ເປັນສະມາຊິກຂອງ ສຕລ ຕ້ອງໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງ ໂດຍກອງປະຊຸມໃຫຍ່ຂອງອົງການຈັດຕັ້ງຂອງຕົນ. ກົດລະບຽບຂອງສະມາຊິກ ຕ້ອງກໍານົດຂັ້ນຕອນການຮັບປະກັນຄວາມເປັນເຈົ້າຕົນເອງໃນການເລືອກຕັ້ງ ຫຼື ການແຕ່ງຕັ້ງ.

3. ສຕລ ຈະບໍ່ຮັບຮອງອົງການຈັດຕັ້ງທີ່ເປັນສະມາຊິກຂອງ ສຕລ ທີ່ບໍ່ໄດ້ຖືກເລືອກຕັ້ງ ຫຼື ແຕ່ງຕັ້ງຕາມຂໍ້ກໍານົດ ຂອງຂໍ້ 2 ຂ້າງເທິງນີ້ ລວມທັງຄໍາຕັດສິນອື່ນໆ.

## ມາດຕາ 21 ວ່າດ້ວຍສະຖານະພາບ ຂອງສະຫະພັນບານເຕະແຂວງ/ນະຄອນຫຼວງ ແລະ ສະໂມສອນ

1. ສະຫະພັນບານເຕະແຂວງ/ນະຄອນຫຼວງ ແລະ ສະໂມສອນ ທີ່ຂຶ້ນກັບ ສຕລ ແມ່ນນິຕິບຸກຄົນ ແລະ ໄດ້ຮັບການຮັບຮອງຈາກ ສຕລ.

2. ກົດລະບຽບ ແລະ ລະບຽບການຕ່າງໆຂອງນິຕິບຸກຄົນດັ່ງກ່າວ ຕ້ອງໄດ້ຮັບການຮັບຮອງ ຈາກ ສຕລ. ສຕລ ມີໜ້າທີ່ໃນການວາງລະບຽບກ່ຽວກັບ ການຕັດສິນ, ການຕ້ານການໃຊ້ສານກະຕຸ້ນ, ການລົງທະບຽນນັກເຕະ, ການອອກໃບອະນຸຍາດສະໂມສອນ, ການກໍານົດບົດລົງໂທດທາງວິໄນ, ລວມທັງ ການລະເມີດ ກົດຈັນຍາບັນ ແລະ ມາດຕະການ ເພື່ອປົກປ້ອງຄວາມໂປ່ງໃສໃນການແຂ່ງຂັນ.

3. ບຸກຄົນ (ສະມາຊິກຄອບຄົວ) ຫຼື ນິຕິບຸກຄົນ ບໍ່ສາມາດສ້າງຕັ້ງ ຫຼາຍກວ່າ ໜຶ່ງສະໂມສອນ ຫຼື ໜຶ່ງກຸ່ມຂອງ ສະໂມສອນ ເຊິ່ງອາດມີຜົນກະທົບຕໍ່ຄວາມໂປ່ງໃສ ຂອງການແຂ່ງຂັນ.

# ພາກທີ III

## ວ່າດ້ວຍປະທານກິດຕິມະສັກ ແລະ ທີ່ປຶກສາ

### ມາດຕາ 22 ວ່າດ້ວຍປະທານກິດຕິມະສັກ ແລະ ທີ່ປຶກສາ

1. ປະທານກິດຕິມະສັກ ແລະ ທີ່ປຶກສາ ແມ່ນບຸກຄົນທີ່ມີຜົນງານດີເດັ່ນຕໍ່ວຽກງານກິລາບານເຕະ. ກອງປະຊຸມໃຫ່ຍ ມີສິດແຕ່ງຕັ້ງ ປະທານກິດຕິມະສັກ ແລະ ທີ່ປຶກສາຂອງ ສຕລ.
2. ຄະນະບໍລິຫານງານ ສຕລ ເປັນຜູ້ສະເໜີລາຍຊື່ຂອງບຸກຄົນດັ່ງກ່າວ ຕໍ່ກອງປະຊຸມໃຫຍ່ ສຕລ.
3. ປະທານກິດຕິມະສັກ ແລະ ທີ່ປຶກສາ ມີສິດເຂົ້າຮ່ວມ ແລະ ສະແດງຄຳຄິດຄຳເຫັນຕໍ່ກອງປະຊຸມໃຫຍ່ ສຕລ ແລະ/ຫຼື ກອງປະຊຸມຄະນະບໍລິຫານງານ ສຕລ ໂດຍບໍ່ມີສິດລົງຄະແນນສຽງ.

## ພາກທີ IV

## ວ່າດ້ວຍໂຄງຮ່າງການຈັດຕັ້ງ

### ມາດຕາ 23 ວ່າດ້ວຍອົງປະກອບການຈັດຕັ້ງ ຂອງ ສຕລ

ອົງປະກອບການຈັດຕັ້ງ ຂອງ ສຕລ ມີດັ່ງນີ້:

1. ກອງປະຊຸມໃຫຍ່.
2. ຄະນະບໍລິຫານງານ.
3. ຄະນະປະຈຳ.
4. ກອງເລຂາທິການ.
5. ອະນຸກຳມະການອອກໃບອະນຸຍາດສະໂມສອນ.
6. ອະນຸກຳມະການອິດສະຫຼະ (ອະນຸກຳມະການກວດສອບບັນຊີ, ອະນຸກຳມະການການເລືອກຕັ້ງ, ອະນຸກຳມະການວິໄນ ແລະ ອະນຸກຳມະການອຸທອນ).
7. ສະມາຊິກ.

ອົງປະກອບການຈັດຕັ້ງຂອງ ສຕລ ໃນມາດຕາດັ່ງກ່າວນີ້ຕ້ອງມາຈາກການຮັບຮອງຂອງກອງປະຊຸມໃຫຍ່. ສະເພາະຄະນະກຳມະການສະເພາະກິດ ແມ່ນຄະນະປະຈຳເປັນຜູ້ຕົກລົງສ້າງຕັ້ງຂຶ້ນຕາມຄວາມຕ້ອງການອັນຈຳເປັນຂອງວຽກງານ.

### ມາດຕາ 24 ການພົ້ນຈາກການເປັນກຳມະການຂອງອະນຸກຳມະການຕ່າງໆຂອງ ສຕລ

1. ຄະນະບໍລິຫານງານ ມີສິດພິຈາລະນາລົງມະຕິໃຫ້ກຳມະການໃດໜຶ່ງໃນອະນຸກຳມະການຕ່າງໆຂອງ ສຕລ ພົ້ນຈາກໜ້າທີ່ຊົ່ວຄາວໄດ້ ຖ້າຫາກມີການສະເໜີຂອງກຳມະການຄະນະບໍລິຫານງານ ສຕລ ຢ່າງໜ້ອຍໜຶ່ງສ່ວນສາມຂຶ້ນໄປ ໂດຍມີເຫດຜົນພຽງພໍ. ມະຕິຕົກລົງດັ່ງກ່າວມີຜົນສັກສິດທັນທີ ນັບແຕ່ເວລາລົງມະຕິເປັນຕົ້ນໄປ.

2. ກຳມະການໃນອະນຸກຳມະການໃດໜຶ່ງຂອງ ສຕລ ທີ່ຖືກລົງມະຕິໃຫ້ພົ້ນຈາກໜ້າທີ່ຊົ່ວຄາວ ມີສິດໃນການປົກປ້ອງໂດຍຕົນເອງ ຖ້າຫາກຜູ້ກ່ຽວມີຄວາມປະສົງ.

3. ມະຕິຕົກລົງໃຫ້ພົ້ນຈາກການເປັນກຳມະການໃນອະນຸກຳມະການໃດໜຶ່ງຂອງ ສຕລ ຕ້ອງໄດ້ຮັບການຕັດສິນ ດ້ວຍການລົງຄະແນນສຽງແບບປິດລັບ. ມະຕິຕົກລົງທີ່ຈະຖືກຮັບຮອງ ຕ້ອງມີຈຳນວນຄະແນນສຽງສອງສ່ວນສາມ ຂອງຜູ້ມີສິດລົງຄະແນນສຽງທີ່ຖືກຕ້ອງ.

## ມາດຕາ 25 ວ່າດ້ວຍອົງປະກອບ ຂອງກອງປະຊຸມໃຫຍ່ ສຕລ

ອົງປະກອບຂອງກອງປະຊຸມໃຫຍ່ ສຕລ ມີດັ່ງນີ້:

1. ກອງປະຊຸມໃຫຍ່ ແມ່ນອົງການນຳສູງສຸດຂອງ ສຕລ ເຊິ່ງເປີດຂຶ້ນຕາມປົກກະຕິ ໂດຍມີສະມາຊິກ ສາມສ່ວນສີ່ (3/4) ເປັນຢ່າງໜ້ອຍຂອງ ສຕລ ເຂົ້າຮ່ວມ.

2. ກອງປະຊຸມໃຫຍ່ສະໄໝສາມັນ ແມ່ນເປີດຂຶ້ນປີລະຄັ້ງ. ໃນກໍລະນີຈຳເປັນ ສາມາດເປີດກອງປະຊຸມໃຫຍ່ສະໄໝວິສາມັນ ເວລາໃດກໍ່ໄດ້ ຕາມການສະເໜີຂອງຄະນະບໍລິຫານງານ ສອງສ່ວນສາມ (2/3) ຂຶ້ນໄປ.

3. ປະທານ ສຕລ ຕ້ອງດຳເນີນກອງປະຊຸມໃຫຍ່ ໂດຍສອດຄ່ອງກັບ ກົດລະບຽບ ຂອງ ສຕລ ແລະ ເນື້ອໃນຂໍ້ 2 ຂອງມາດຕານີ້.

4. ປະທານກິດຕິມະສັກ ແລະ ທີ່ປຶກສາ ມີສິດເຂົ້າຮ່ວມ ແລະ ສະແດງຄຳຄິດຄຳເຫັນຕໍ່ກອງປະຊຸມໃຫຍ່ ສຕລ ໂດຍບໍ່ມີສິດລົງຄະແນນສຽງ.

## ມາດຕາ 26 ວ່າດ້ວຍຜູ້ແທນກອງປະຊຸມໃຫຍ່ ສຕລ ແລະ ການລົງຄະແນນສຽງ

ກ. ວ່າດ້ວຍຜູ້ແທນກອງປະຊຸມໃຫຍ່ ສຕລ

1. ຜູ້ແທນກອງປະຊຸມໃຫຍ່ ສຕລ ແມ່ນຜູ້ທີ່ເປັນສະມາຊິກຂອງ ສຕລ.

2. ຜູ້ແທນກອງປະຊຸມໃຫຍ່ ຕ້ອງເປັນສະມາຊິກຂອງ ສຕລ ຫຼື ຜູ້ຕາງໜ້າທີ່ໄດ້ຮັບການແຕ່ງຕັ້ງຢ່າງເປັນລາຍລັກອັກສອນຈາກການຈັດຕັ້ງຂອງຕົນ ຕາມມາດຕາ 20 ຂອງກົດລະບຽບສະບັບນີ້.

ຂ. ວ່າດ້ວຍການລົງຄະແນນສຽງ

1. ສະມາຊິກຂອງ ສຕລ ແຕ່ລະຄົນ ມີສິດລົງຄະແນນສຽງໄດ້ໜຶ່ງ (1) ຄະແນນສຽງດ້ວຍຕົນເອງໃນກອງປະຊຸມໃຫຍ່ ຫຼື ໂດຍຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງເປັນລາຍລັກອັກສອນຈາກການຈັດຕັ້ງຂອງຕົນເອງ. ມີແຕ່ຜູ້ແທນກອງປະຊຸມໃຫຍ່ເທົ່ານັ້ນ ທີ່ມີສິດລົງຄະແນນສຽງໄດ້.
2. ກຳມະການຄະນະບໍລິຫານງານ ແລະ ເລຂາທິການ ຕ້ອງເຂົ້າຮ່ວມກອງປະຊຸມໃຫຍ່ ສຕລ ທຸກຄັ້ງໂດຍບໍ່ມີສິດລົງຄະແນນສຽງ.

## ມາດຕາ 27 ວ່າດ້ວຍສິດອຳນາດຂອງກອງປະຊຸມໃຫຍ່ ສຕລ

ກອງປະຊຸມໃຫຍ່ ສຕລ ມີສິດອຳນາດດັ່ງລຸ່ມນີ້:

1. ຮັບຮອງເອົາວາລະຂອງກອງປະຊຸມໃຫຍ່ ສຕລ;
2. ຮັບຮອງເອົາບົດລາຍງານປະຈຳປີ ແລະ ແຜນພັດທະນາຂອງ ສຕລ (ລວມທັງກິດຈະກຳຕ່າງໆຂອງ ສຕລ);
3. ຮັບຮອງເອົາ ຫຼື ດັດແກ້ ກົດລະບຽບ ແລະ ບັນຫາອື່ນໆຂອງ ສຕລ;
4. ຮັບຮອງເອົາການແຕ່ງຕັ້ງຕຳແໜ່ງປະທານ ສຕລ ຫຼື ປະທານ ກິດຕິມະສັກ ຕາມການສະເໜີຊື່ຂອງຄະນະບໍລິຫານງານ;
5. ຮັບຮອງເອົາຜົນການກວດສອບ ງົບປະມານການເງິນປະຈຳປີ, ລວມທັງ ລວມຍອດເງິນປະຈຳປີ ແລະ ບົດລາຍງານປະຈຳປີ;
6. ຮັບຮອງເອົາແຜນງົບປະມານປະຈຳປີ;
7. ຮັບຮອງເອົາສະມາຊິກ ແລະ ຮັບຮອງເອົາການສິ້ນສຸດສະມາຊິກກະພາບ ຕາມການສະເໜີຂອງຄະນະບໍລິຫານງານ;
8. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ແລະ ກຳມະການຄະນະບໍລິຫານງານ ສຕລ ຕາມມາດຕາ 30 ຂອງກົດລະບຽບສະບັບນີ້;
9. ເລືອກຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ກຳມະການຂອງອະນຸກຳມະການອິດສະຫຼະ;
10. ແຕ່ງຕັ້ງຄະນະຮັບຜິດຊອບການເລືອກຕັ້ງ;
11. ແຕ່ງຕັ້ງ ສະມາຊິກ ສາມ (3) ທ່ານ ເພື່ອກວດກາ ແລະ ຮັບປະກັນຄວາມຖືກຕ້ອງຂອງບົດບັນທຶກກອງປະຊຸມໃຫຍ່ ແລ້ວນຳສະເໜີໃຫ້ກອງປະຊຸມໃຫຍ່ ສຕລ ທີ່ຖັດໄປ;
12. ແຕ່ງຕັ້ງຜູ້ກວດສອບບັນຊີອິດສະຫຼະ ຕາມການສະເໜີຂອງຄະນະບໍລິຫານງານ;

## ມາດຕາ 28 ວ່າດ້ວຍອົງປະຊຸມ ຂອງກອງປະຊຸມໃຫຍ່ ສຕລ

1. ກອງປະຊຸມໃຫຍ່ ສຕລ ສາມາດເປີດຂຶ້ນໄດ້ກໍ່ຕໍ່ເມື່ອມີອົງປະຊຸມຫຼາຍກວ່າສອງສ່ວນສາມຂອງຈຳນວນສະມາຊິກທັງໝົດ.

2. ຖ້າຫາກບໍ່ຄົບອົງປະຊຸມ ແມ່ນເປີດກອງປະຊຸມໃຫຍ່ບໍ່ໄດ້, ແຕ່ຕ້ອງຈັດກອງປະຊຸມໃຫຍ່ຂຶ້ນໃຫ້ໄດ້ພາຍໃນເວລາອັນຄວນ ໂດຍໃຫ້ຮັກສາວາລະກອງປະຊຸມໄວ້ຄືເກົ່າ.

3. ຖ້າຫາກເປີດກອງປະຊຸມໃຫຍ່ບໍ່ໄດ້ (ຕາມມາດຕາ 28 ຂໍ້ 2) ກອງປະຊຸມໃຫຍ່ທີ່ຈະເປີດຂຶ້ນໃໝ່ແມ່ນດຳເນີນໄດ້ ໂດຍບໍ່ກຳນົດອົງປະຊຸມ, ແຕ່ກອງປະຊຸມໃຫຍ່ນີ້ ແມ່ນບໍ່ມີສິດລົງມະຕິ ກ່ຽວກັບການ

ດັດແກ້ ກົດລະບຽບຂອງ ສຕລ, ການເລືອກຕັ້ງປະທານ, ຮອງປະທານ ແລະ ກຳມະການຄະນະບໍລິຫານງານ, ຫົວໜ້າ ແລະ ກຳມະການຂອງອະນຸກຳມະການອິດສະຫຼະ ແລະ ການຍົກເລີກສະມາຊິກກະພາບຂອງ ສຕລ.

## ມາດຕາ 29 ວ່າດ້ວຍມະຕິຕົກລົງ ຂອງກອງປະຊຸມໃຫຍ່ ສຕລ

1. ມະຕິຕົກລົງ ຂອງກອງປະຊຸມໃຫຍ່ ສຕລ ຈະຖືກຮັບຮອງເອົາ ໂດຍການລົງຄະແນນສຽງແບບປິດລັບ ຫຼື ໂດຍການລົງຄະແນນສຽງແບບຍົກມື ຫຼື ໂດຍການຍົກບັດ ຫຼື ໂດຍຜ່ານລະບົບອີເລັກໂຕນິກຮັບຮອງກໍ່ໄດ້.

2. ມະຕິຕົກລົງໃດໆຂອງກອງປະຊຸມໃຫຍ່ ສຕລ ທີ່ລົງຄະແນນສຽງຮັບຮອງເອົາ ຈະມີຜົນສັກສິດກໍ່ຕໍ່ເມື່ອຖືກຕ້ອງຕາມເນື້ອໃນໃຈຄວາມຂອງກົດລະບຽບສະບັບນີ້. ນອກຈາກນັ້ນຖືວ່າໂມຄະ.

## ມາດຕາ 30 ວ່າດ້ວຍການເລືອກຕັ້ງຂອງ ສຕລ

1. ການເລືອກຕັ້ງຂອງ ສຕລ ຕ້ອງຈັດຂຶ້ນ ດ້ວຍການລົງຄະແນນສຽງໂດຍກົງ ແລະ ປິດລັບ.

2. ການເລືອກຕັ້ງ ພາຍໃນ ສຕລ ຕ້ອງໄດ້ປະຕິບັດຕາມກົດລະບຽບ ວ່າດ້ວຍການເລືອກຕັ້ງ ຂອງ ສຕລ ແລະ ດຳເນີນການໂດຍ ຄະນະກຳມະການເລືອກຕັ້ງ ທີ່ຖືກຮັບຮອງໂດຍກອງປະຊຸມໃຫຍ່.

3. ການເລືອກຕັ້ງ ຕຳແໜ່ງໃດໜຶ່ງ ຂອງ ຄະນະບໍລິຫານງານຕ້ອງໄດ້ຖືກເລືອກຕັ້ງຕາມແຕ່ລະຕຳແໜ່ງນັ້ນ. ຜູ້ສະໝັກແຕ່ລະຕຳແໜ່ງໃນຄະນະບໍລິຫານງານດັ່ງກ່າວ ຕ້ອງໄດ້ຖືກສະເໜີຊື່ ໂດຍສະມາຊິກຢ່າງໜ້ອຍ ສາມ (3) ທ່ານ. ສະມາຊິກ ແຕ່ລະທ່ານ ສາມາດສະໜັບສະໜູນຜູ້ສະໝັກໄດ້ພຽງໜຶ່ງ (1) ທ່ານເທົ່ານັ້ນ ໃນແຕ່ລະຕຳແໜ່ງທີ່ສະເໜີມານັ້ນ.

4. ສຳລັບການເລືອກຕັ້ງ ປະທານ, ບັນດາຮອງປະທານ ແລະ ກຳມະການຄະນະບໍລິຫານງານ ຂອງ ສຕລ ຕ້ອງໄດ້ຮັບຄະແນນສຽງກວ່າເຄິ່ງ ຂອງຜູ້ມີສິດເຂົ້າຮ່ວມການເລືອກຕັ້ງນັ້ນ.

5. ໃນກໍລະນີທີ່ ຜູ້ສະໝັກເລືອກຕັ້ງເຂົ້າໃນແຕ່ລະຕຳແໜ່ງ ທີ່ກ່າວມາໃນຂໍ້ 4 ເທິງນັ້ນ ຫາກມີຄະແນນສຽງສະເໝີກັນ ແມ່ນຕ້ອງໄດ້ດຳເນີນການປ່ອນບັດເລືອກຕັ້ງຄືນໃໝ່ໃນທັນທີ ຕາມວິທີທີ່ໄດ້ດຳເນີນມາກ່ອນນັ້ນ.

6. ລາຍຊື່ຂອງຜູ້ສະໝັກເລືອກຕັ້ງເຂົ້າໃນແຕ່ລະຕຳແໜ່ງ ທີ່ກ່າວມາໃນຂໍ້ 4 ເທິງນັ້ນ ຕ້ອງໄດ້ສົ່ງໃຫ້ ກອງເລຂາທິການຂອງ ສຕລ ຢ່າງໜ້ອຍ ສີ່ສິບຫ້າ (45) ວັນ ກ່ອນກອງປະຊຸມໃຫຍ່ເລືອກຕັ້ງ ທີ່ກ່ຽວຂ້ອງ. ກອງເລຂາທິການ ສຕລ ຕ້ອງສົ່ງລາຍຊື່ ແລະ ຊີວະປະຫວັດຂອງຜູ້ສະໝັກເລືອກຕັ້ງເຂົ້າໃນແຕ່ລະຕຳແໜ່ງທີ່ກ່າວມານັ້ນ ຕ້ອງສົ່ງໃຫ້ຄະນະກຳມະການການເລືອກຕັ້ງອິດສະຫຼະ ພິຈາລະນາຢ່າງຊ້າເປັນເວລາ ສາມ (3) ວັນ ນັບແຕ່ວັນໄດ້ຮັບລາຍຊື່ເປັນຕົ້ນໄປ. ຄະນະກຳມະການເລືອກຕັ້ງອິດສະຫຼະດັ່ງກ່າວ ຕ້ອງໄດ້ພິຈາລະນາລາຍຊື່ຂອງຜູ້ສະໝັກເລືອກຕັ້ງດັ່ງກ່າວນັ້ນໃຫ້ສຳເລັດ ແລະ ສົ່ງຜົນການພິຈາລະນາຄືນໄປໃຫ້ກອງເລຂາທິການ ຢ່າງຊ້າ ຊາວ (20) ວັນ. ກອງເລຂາທິການຂອງ ສຕລ ຕ້ອງປະກາດລາຍຊື່ຜູ້ສະໝັກເລືອກຕັ້ງຢ່າງເປັນທາງການ ໃຫ້ສະມາຊິກຂອງ ສຕລ ຢ່າງໜ້ອຍ ສິບຫ້າ (15) ວັນ ກ່ອນກອງປະຊຸມໃຫຍ່ດັ່ງກ່າວ. ພາຍຫຼັງປະກາດລາຍຊື່ຜູ້ສະໝັກເລືອກຕັ້ງຢ່າງເປັນທາງການແລ້ວ ຖ້າຫາກສະມາຊິກ ສຕລ ໃດໜຶ່ງ ມີຂໍ້ທັກທ້ວງຕໍ່ຜູ້ສະໝັກເລືອກຕັ້ງນັ້ນ ໃຫ້ສົ່ງຂໍ້ທັກທ້ວງຂອງຕົນເປັນລາຍລັກອັກສອນ ໄປຍັງກອງເລຂາທິການ ສຕລ ພາຍໃນ ເຈັດ (7) ວັນ.

## ມາດຕາ 31 ວ່າດ້ວຍກອງປະຊຸມໃຫຍ່ ສຕລ ສະໄໝສາມັນ

1. ກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ຕ້ອງຈັດຂຶ້ນໜຶ່ງ (1) ຄັ້ງຕໍ່ປີ ໂດຍແມ່ນຄະນະບໍລິຫານງານ ສຕລ ເປັນຜູ້ຮຽກໂຮມ.

2. ຄະນະບໍລິຫານງານ ສຕລ ເປັນຜູ້ກຳນົດ ສະຖານທີ່ ແລະ ວັນເວລາດຳເນີນກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ເຊິ່ງຈະຕ້ອງແຈ້ງເປັນລາຍລັກອັກສອນໃຫ້ສະມາຊິກຮັບຊາບ ຢ່າງໜ້ອຍ ສີ່ສິບຫ້າ (45) ວັນລ່ວງໜ້າ.

3. ວາລະກອງປະຊຸມ ຕ້ອງສົ່ງໃຫ້ສະມາຊິກເປັນລາຍລັກອັກສອນ ສິບຫ້າ (15) ວັນກ່ອນວັນເປີດກອງປະຊຸມໃຫຍ່ ສຕລ.

## ມາດຕາ 32 ວ່າດ້ວຍວາລະກອງປະຊຸມໃຫຍ່ ສຕລ ສະໄໝສາມັນ

1. ເລຂາທິການ ສຕລ ເປັນຜູ້ຮ່າງວາລະກອງປະຊຸມໃຫຍ່ ສຕລ ຕາມການຕົກລົງເຫັນດີຂອງຄະນະບໍລິຫານງານ ສຕລ.

2. ວາລະກອງປະຊຸມໃຫ່ຍ ສຕລ ປະກອບດ້ວຍເນື້ອໃນດັ່ງນີ້:

ກ) ແຈ້ງໃຫ້ກອງປະຊຸມຊາບກ່ຽວກັບບ່ອນອີງ ແລະ ຈຸດປະສົງຂອງການດຳເນີນກອງປະຊຸມ;

ຂ) ຮັບຮອງເອົາ ວາລະກອງປະຊຸມ.

ໃນກໍລະນີຫາກມີຈຳນວນສາມສ່ວນສີ່ ຂອງສະມາຊິກທີ່ເຂົ້າຮ່ວມ ແລະ ມີສິດລົງຄະແນນສຽງ ໃນກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ສະເໜີກ່ຽວກັບການປ່ຽນແປງ ຫຼື ເພີ່ມວາລະກອງປະຊຸມດັ່ງກ່າວ ແມ່ນເຫັນດີພິຈາລະນາ;

ຄ) ຄຳປາໃສເປີດກອງປະຊຸມຂອງປະທານ ສຕລ;

ງ) ຮັບຮອງເອົາ ບົດບັນທຶກກອງປະຊຸມ ຂອງກອງປະຊຸມໃຫ່ຍ ສຕລ ຄັ້ງທີ່ຜ່ານມາ;

ຈ) ແຕ່ງຕັ້ງ ສະມາຊິກ ສາມ (3) ທ່ານ ເພື່ອກວດກາ ແລະ ຮັບປະກັນຄວາມຖືກຕ້ອງຂອງບົດບັນທຶກກອງປະຊຸມໃຫຍ່ ແລ້ວນຳສະເໜີໃຫ້ກອງປະຊຸມໃຫຍ່ ສຕລ ທີ່ຖັດໄປ;

ສ) ແຕ່ງຕັ້ງ ຄະນະກຳມະການ ສາມ (3) ທ່ານ ເພື່ອຮັບຜິດຊອບນັບຄະແນນສຽງ;

ຊ) ໂຈະ ຫຼື ການຍົກເລີກສະມາຊິກກະພາບ (ຖ້າມີ);

ດ) ຮັບຮອງເອົາບົດລາຍງານປະຈຳປີ ແລະ ແຜນພັດທະນາຂອງ ສຕລ (ລວມທັງກິດຈະກຳຕ່າງໆຂອງ ສຕລ);

ຕ) ຮັບຮອງເອົາຜົນການປະຕິບັດງົບປະມານການເງິນປະຈຳປີຜ່ານມາ;

ຖ) ຮັບຮອງເອົາແຜນງົບປະມານການເງິນປີຖັດໄປ;

ທ) ພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາ ຂໍ້ສະເໜີດັດແກ້ ກົດລະບຽບ ສຕລ (ຖ້າມີ);

ນ) ປຶກສາຫາລື ຂໍ້ສະເໜີທີ່ສະເໜີໂດຍສະມາຊິກ (ຖ້າມີ);

ບ) ແຕ່ງຕັ້ງ ຜູ້ກວດສອບບັນຊີອິດສະຫຼະ (ຖ້າມີ) ຕາມການສະເໜີ ຂອງຄະນະບໍລິຫານງານ;

ປ) ເລືອກຕັ້ງ, ຮັບຮອງ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ກຳມະການຂອງອະນຸກຳມະການອິດສະຫຼະຕ່າງໆ (ຖ້າມີ);

ຜ) ເລືອກຕັ້ງ ປະທານ, ຮອງປະທານ ແລະ ກຳມະການຄະນະບໍລິຫານງານ ສຕລ (ຖ້າມີ);

ຝ) ຮັບເອົາສະມາຊິກໃໝ່ (ຖ້າມີ);

ພ) ກອງປະຊຸມໃຫຍ່ ສຕລ ບໍ່ພິຈາລະນາບັນຫາໃດໜຶ່ງ ທີ່ບໍ່ໄດ້ມີຢູ່ໃນວາລະກອງປະຊຸມ.

## ມາດຕາ 33 ວ່າດ້ວຍກອງປະຊຸມໃຫຍ່ ສຕລ ສະໄໝວິສາມັນ

1. ຄະນະບໍລິຫານງານ ສຕລ ອາດຈະຈັດກອງປະຊຸມໃຫຍ່ ສຕລ ສະໄໝວິສາມັນ ຂຶ້ນໄດ້ຕາມ ຄວາມຈໍາເປັນ.

2. ຄະນະບໍລິຫານງານ ສຕລ ເປັນຜູ້ພິຈາລະນາກ່ຽວກັບການຈັດກອງປະຊຸມໃຫຍ່ ສຕລ ສະໄໝວິສາມັນ ຖ້າຫາກມີສະມາຊິກກວ່າເຄິ່ງຂອງ ສຕລ ເຮັດຄໍາຮ້ອງເປັນລາຍລັກອັກສອນ ສົ່ງເຖິງເລຂາທິການ ສຕລ. ຄໍາຮ້ອງດັ່ງກ່າວ ຕ້ອງໄດ້ລະບຸເນື້ອໃນຕ່າງໆ ທີ່ຈະນໍາເຂົ້າໃນວາລະກອງປະຊຸມ. ຄະນະບໍລິຫານງານ ສຕລ ຕ້ອງເປີດກອງປະຊຸມຄົບຄະນະພາຍໃນ ເຈັດ (7) ວັນ ນັບແຕ່ມື້ໄດ້ຮັບຄໍາຮ້ອງດັ່ງກ່າວ ເພື່ອພິຈາລະນາ ວ່າຄໍາຮ້ອງດັ່ງກ່າວສອດຄ່ອງກັບກົດຂໍ້ບັງຄັບຂອງກົດລະບຽບ ສຕລ ຫຼືບໍ່ ແລະ ຕ້ອງໄດ້ຮັບການເຫັນດີໂດຍຈໍານວນ ສອງສ່ວນສາມ ຂອງຄະນະບໍລິຫານງານ ສຕລ ທັງໝົດ ຈຶ່ງເປີດກອງ ປະຊຸມໃຫຍ່ ສຕລ ສະໄໝວິສາມັນໄດ້.

3. ເລຂາທິການ ສຕລ ຕ້ອງແຈ້ງຜົນຂອງກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ ດັ່ງກ່າວໃຫ້ສະມາຊິກ ສຕລ ຊາບ ພາຍໃນກໍານົດ ສາມ (3) ວັນ. ແຕ່ລະສະມາຊິກ ສຕລ ຕ້ອງສົ່ງຄໍາຕອບເຫັນດີ ຫຼື ບໍ່ເຫັນດີ ເຂົ້າຮ່ວມກອງປະຊຸມໃຫຍ່ ສຕລ ສະໄໝວິສາມັນ ດ້ວຍລາຍລັກອັກສອນຄືນໃຫ້ເລຂາທິການ ສຕລ ຢ່າງຊ້າສຸດ ຫ້າ (5) ວັນ.

4. ໃນກໍລະນີສາມສ່ວນສີ່ ຂອງຈໍານວນສະມາຊິກທັງໝົດຂອງ ສຕລ ເຫັນດີເຂົ້າຮ່ວມ ແມ່ນໃຫ້ເປີດກອງປະຊຸມໃຫຍ່ ສຕລ ສະໄໝວິສາມັນດັ່ງກ່າວໄດ້, ແຕ່ຕ້ອງຈັດຂຶ້ນພາຍໃນ ສາມ (3) ເດືອນ ນັບແຕ່ມື້ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

5. ເລຂາທິການ ສຕລ ຕ້ອງແຈ້ງໃຫ້ສະມາຊິກ ສຕລ ທັງໝົດຊາບດ້ວຍລາຍລັກອັກສອນ ກ່ຽວກັບສະຖານທີ່, ວັນເວລາ ແລະ ວາລະກອງປະຊຸມ ຢ່າງໜ້ອຍສິບຫ້າ (15) ວັນ ກ່ອນວັນເປີດ ກອງປະຊຸມໃຫຍ່ ສຕລ ສະໄໝວິສາມັນ.

6. ເມື່ອກອງປະຊຸມໃຫຍ່ ສຕລ ສະໄໝວິສາມັນ ໄດ້ຈັດຂຶ້ນໂດຍຄະນະບໍລິຫານງານ ສຕລ, ຄະນະບໍລິຫານງານ ສຕລ ຕ້ອງດໍາເນີນກອງປະຊຸມຕາມວາລະທີ່ສະມາຊິກກວ່າເຄິ່ງໄດ້ຮ້ອງຂໍມານັ້ນ ໂດຍບໍ່ໃຫ້ປ່ຽນແປງແຕ່ຢ່າງໃດ.

## ມາດຕາ 34 ວ່າດ້ວຍການດັດແກ້ກົດລະບຽບ ສຕລ

1. ມີແຕ່ກອງປະຊຸມໃຫຍ່ ສຕລ ເທົ່ານັ້ນ ຈຶ່ງມີສິດພິຈາລະນາຕົກລົງໃນການດັດແກ້ ກົດລະບຽບ ສຕລ.

2. ສະມາຊິກ ສຕລ ແລະ/ຫຼື ຄະນະບໍລິຫານງານ ສຕລ ທີ່ມີຄວາມປະສົງໃນການດັດແກ້ກົດລະບຽບ ສຕລ ຕ້ອງສົ່ງຂໍ້ສະເໜີຂອງຕົນເປັນລາຍລັກອັກສອນ ໃຫ້ເລຂາທິການ ສຕລ ເຊິ່ງໃນຂໍ້ສະເໜີນັ້ນຕ້ອງມີການ

ອະທິບາຍໂດຍຫຍໍ້ຄວາມປະສົງ ແລະ ເຫດຜົນຂອງຕົນ. ແຕ່ຂໍ້ສະເໜີດັ່ງກ່າວ ຕ້ອງໄດ້ຮັບສຽງສະໜັບສະໜູນຈາກສະມາຊິກ ສຕລ ແລະ/ຫຼື ຄະນະບໍລິຫານງານ ສຕລ ເກີນ ຫ້າສິບເປີເຊັນ (50%) ຂຶ້ນໄປ.

3. ການດັດແກ້ກົດລະບຽບຂອງ ສຕລ ຈະມີຜົນສັກສິດບັງຄັບໃຊ້ໄດ້ ກໍ່ຕໍ່ເມື່ອໄດ້ຮັບການສະໜັບສະໜູນຈາກຜູ້ມີສິດລົງຄະແນນສຽງໃນກອງປະຊຸມກວ່າ ສາມສ່ວນສີ່ຂຶ້ນໄປ.

## ມາດຕາ 35 ວ່າດ້ວຍບົດບັນທຶກກອງປະຊຸມໃຫຍ່ ສຕລ

ເລຂາທິການ ສຕລ ເປັນຜູ້ຮັບຜິດຊອບໃນການບັນທຶກທຸກໆວາລະກອງປະຊຸມ ໃນກອງປະຊຸມໃຫຍ່ ສຕລ ແຕ່ລະຄັ້ງ. ບົດບັນທຶກດັ່ງກ່າວ ຕ້ອງໄດ້ຮັບການກວດສອບ ໂດຍສະມາຊິກ ສາມ (3) ທ່ານ ທີ່ກອງປະຊຸມໃຫຍ່ ສຕລ ຮັບຮອງເອົາ ເຊິ່ງບົດບັນທຶກນີ້ ຈະໄດ້ຖືກຮັບຮອງເອົາເປັນຂັ້ນສຸດທ້າຍ ໃນກອງປະຊຸມໃຫຍ່ ສຕລ ຄັ້ງຖັດໄປ.

## ມາດຕາ 36 ວ່າດ້ວຍຜົນສັກສິດ ຂອງມະຕິກອງປະຊຸມໃຫຍ່ ສຕລ

ມະຕິກອງປະຊຸມໃຫຍ່ ສຕລ ມີຜົນສັກສິດນັບແຕ່ມື້ກອງປະຊຸມໃຫຍ່ຮັບຮອງ ເປັນຕົ້ນໄປ ແລະ ມີຜົນບັງຄັບໃຊ້ ພາຍຫຼັງກອງປະຊຸມໃຫຍ່ ສຕລ ຄັ້ງດັ່ງກ່າວຮັບຮອງເອົາ ສິບຫ້າ (15) ວັນ.

## ມາດຕາ 37 ວ່າດ້ວຍອົງປະກອບຂອງຄະນະບໍລິຫານງານ ສຕລ

ອົງປະກອບຂອງຄະນະບໍລິຫານງານ ສຕລ ມີດັ່ງນີ້:

1. ຄະນະບໍລິຫານງານ ປະກອບດ້ວຍກຳມະການ ສິບເອັດ (11) ທ່ານ:

- ປະທານ ໜຶ່ງ (1) ທ່ານ
- ຮອງປະທານ ສີ່ (4) ທ່ານ
- ກຳມະການ ຫົກ (6) ທ່ານ (ຢ່າງໜ້ອຍຕ້ອງມີ ເພດຍິງ 1 ທ່ານ)

2. ປະທານ, (ບັນດາ) ຮອງປະທານ ແລະ ກຳມະການຄະນະບໍລິຫານງານ ຕ້ອງໄດ້ຮັບການເລືອກຕັ້ງ ໂດຍກອງປະຊຸມໃຫຍ່ ຕາມມາດຕາ 30 ຂອງກົດລະບຽບສະບັບນີ້.

3. ວາລະໃນການດຳລົງຕຳແໜ່ງ ຂອງ ປະທານ, (ບັນດາ) ຮອງປະທານ ແລະ ກຳມະການຄະນະບໍລິຫານງານ ແມ່ນ ສີ່ (4) ປີ. ວາລະໃນການດຳລົງຕຳແໜ່ງດັ່ງກ່າວ ແມ່ນເລີ່ມແຕ່ວັນທີ ທີ່ມະຕິກອງປະຊຸມໃຫຍ່ຮັບຮອງເອົາ ເປັນຕົ້ນໄປ.

4. ບັນດາທ່ານໃນຄະນະບໍລິຫານງານ ສຕລ ຕ້ອງເປັນບຸກຄົນທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວເຮັດວຽກ ໃນກິລາບານເຕະ ຢ່າງໜ້ອຍ ສີ່ (4) ປີ ຕໍ່ເນື່ອງກັນ ແລະ ຕ້ອງມາຈາກສະມາຊິກ ສຕລ (ຍົກເວັ້ນທ່ານທີ່ເຄີຍດຳລົງຕຳແໜ່ງກຳມະການຄະນະບໍລິຫານງານມາແລ້ວ).

5. ຂໍ້ຫ້າມສຳລັບບັນດາທ່ານໃນຄະນະບໍລິຫານງານ ສຕລ ດັ່ງນີ້:

   1. ຫ້າມເປັນສະມາຊິກຂອງທຸກໆຄະນະກຳມະການອິດສະຫຼະ ສຕລ ໃນເວລາດຽວກັນ;

   2. ຫ້າມເປັນຕົວແທນ ຫຼື ຜູ້ຕາງໜ້າຂອງສະມາຊິກ ສຕລ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ ສຕລ.

6. ຖ້າຕຳແໜ່ງໃດໜຶ່ງຂອງຄະນະບໍລິຫານງານ ສຕລ ຫາກວ່າງລົງ ຫຼື ບໍ່ພຽງພໍ, ປະທານ ສຕລ ມີສິດສະເໜີບຸກຄົນທີ່ມີເງື່ອນໄຂຕາມທີ່ກຳນົດໄວ້ໃນມາດຕານີ້ ເພື່ອມາປ່ຽນແທນຕຳແໜ່ງທີ່ວ່າງລົງນັ້ນເປັນການຊົ່ວຄາວ ໂດຍການເຫັນດີຈາກສອງສ່ວນສາມ ຂອງຄະນະບໍລິຫານງານ ສຕລ ທັງໝົດ; ແຕ່ຜູ້ທີ່ໄດ້ມາປ່ຽນແທນໃໝ່ນັ້ນ ຕ້ອງໄດ້ຮັບການຮັບຮອງໃນກອງປະຊຸມໃຫຍ່ ສຕລ ຄັ້ງຖັດໄປ. ວາລະການດຳລົງຕຳແໜ່ງຂອງຜູ້ກ່ຽວ ຈະສິ້ນສຸດລົງພ້ອມກັບອາຍຸການຂອງຄະນະບໍລິຫານງານຊຸດນັ້ນ.

7. ການພົ້ນອອກຈາກຕຳແໜ່ງໃດໜຶ່ງຂອງຄະນະບໍລິຫານງານ ສຕລ ມີກໍລະນີດັ່ງນີ້:

   1. ຂໍລາອອກ;

2. ບໍ່ເຂົ້າຮ່ວມກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ ສາມ (3) ຄັ້ງຕິດຕໍ່ກັນ;

3. ມີການກະທຳຜິດທາງວິໄນຢ່າງໜັກໜ່ວງ ເຊິ່ງສົ່ງຜົນສະທ້ອນຢ່າງຮ້າຍແຮງເຖິງພາບພົດບົດບາດຂອງ ສຕລ ແລະ ວົງການກິລາບານເຕະລາວ;

4. ເສຍຊີວິດ.

## ມາດຕາ 38 ກອງປະຊຸມຄະນະບໍລິຫານງານ

1. ຄະນະບໍລິຫານງານ ຕ້ອງຈັດກອງປະຊຸມ ຄົບຄະນະ ສີ່ຄັ້ງ (4) ຕໍ່ປີ, ໝາຍຄວາມວ່າ ສາມ (3) ເດືອນຕໍ່ຄັ້ງ.

2. ປະທານ ຕ້ອງຈັດກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ຕາມກຳນົດເວລາທີ່ກ່າວມາໃນ ຂໍ້ 1 ຂ້າງເທິງນີ້. ໃນກໍລະນີປະທານບໍ່ຈັດກອງປະຊຸມຕາມກຳນົດເວລາທີ່ກ່າວມານັ້ນ ຖ້າຫາກມີກຳມະການຂອງຄະນະບໍລິຫານງານ ຫຼາຍກວ່າສອງສ່ວນສາມ ຮ້ອງຂໍໃຫ້ມີການຈັດກອງປະຊຸມ, ປະທານກໍ່ຕ້ອງຈັດກອງປະຊຸມດັ່ງກ່າວ ພາຍໃນ ສິບສີ່ (14) ວັນ. ຖ້າຫາກວ່າ ປະທານ ບໍ່ຈັດກອງປະຊຸມຂຶ້ນທັນຕາມການຮ້ອງຂໍນັ້ນໃຫ້ກຳມະການຂອງຄະນະບໍລິຫານງານດັ່ງກ່າວ ຈັດກອງປະຊຸມຂຶ້ນດ້ວຍຕົນເອງ. ມະຕິຕົກລົງຂອງກອງປະຊຸມທີ່ຈັດຂຶ້ນດ້ວຍຕົນເອງນີ້ ຕ້ອງໄດ້ຮັບຄະແນນສຽງເປັນເອກະສັນຈຶ່ງມີຜົນບັງຄັບໃຊ້.

3. ກອງເລຂາ ສຕລ ຕ້ອງເປັນເສນາທິການໃຫ້ປະທານ ໃນການກະກຽມວາລະຂອງກອງປະຊຸມ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ປະທານຮັບຊາບ, ພາຍຫຼັງປະທານເຫັນດີແລ້ວໃຫ້ກອງເລຂາ ດຳເນີນການສົ່ງວາລະຂອງກອງປະຊຸມ ພ້ອມເອກະສານທີ່ກ່ຽວຂ້ອງ ໃຫ້ກຳມະການຂອງຄະນະບໍລິຫານງານທຸກທ່ານ ກ່ອນກອງປະຊຸມ ສິບຫ້າ (15) ວັນ. ຫຼັງຈາກກຳມະການຂອງຄະນະບໍລິຫານງານ ໄດ້ຮັບເອກະສານດັ່ງກ່າວແລ້ວ ຕ້ອງມີຄຳເຫັນຕອບກັບກອງເລຂາ ພາຍໃນ ເຈັດ (7) ວັນ ພາຍຫຼັງກອງເລຂາ ໄດ້ຮັບໜັງສືຕອບກັບຈາກກຳມະການຂອງຄະນະບໍລິຫານງານແລ້ວໃຫ້ສະຫຼຸບສັງລວມລາຍງານຕໍ່ປະທານ ຮັບຊາບຕື່ມ ເພື່ອດຳເນີນການເປີດກອງປະຊຸມ. ກ່ອນຈະເປີດກອງປະຊຸມ ກອງເລຂາ ຕ້ອງໄດ້ສົ່ງວາລະກອງປະຊຸມ ແລະ ເອກະສານທີ່ກ່ຽວຂ້ອງສະບັບປັບປຸງສຸດທ້າຍ ຫຼື ສົມບູນ ສົ່ງໃຫ້ກຳມະການຂອງຄະນະບໍລິຫານງານ ກ່ອນມື້ເປີດກອງປະຊຸມຢ່າງໜ້ອຍ ສາມ (3) ວັນ.

4. ເລຂາທິການ ຕ້ອງເຂົ້າຮ່ວມກອງປະຊຸມຄົບຄະນະຂອງຄະນະບໍລິຫານງານທຸກຄັ້ງ, ແຕ່ບໍ່ມີສິດລົງຄະແນນສຽງ. ຖ້າຫາກ ເລຂາທິການ ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຜູ້ກ່ຽວ ສາມາດສະເໜີຊື່ຜູ້ຕາງໜ້າຂອງຕົນ ເພື່ອເຂົ້າຮ່ວມກອງປະຊຸມແທນ ແຕ່ຕ້ອງໄດ້ຮັບການ ເຫັນດີຈາກຄະນະປະຈຳຂອງຄະນະບໍລິຫານງານເສຍກ່ອນ ຈຶ່ງສາມາດດຳເນີນການໄດ້.

5. ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ຕ້ອງຈັດຂຶ້ນໃນສະຖານທີ່ຫ້ອງປະຊຸມສະເພາະ. ຄະນະບໍລິຫານງານ ມີສິດເຊີນບຸກຄົນທີສາມ ເຂົ້າຮ່ວມກອງປະຊຸມໄດ້ ໂດຍຜູ້ກ່ຽວບໍ່ມີສິດລົງຄະແນນສຽງ, ແຕ່ຜູ້ກ່ຽວມີສິດປະກອບຄໍາເຫັນ ໂດຍໄດ້ຮັບອະນຸຍາດຈາກປະທານກອງປະຊຸມ.

## ມາດຕາ 39 ວ່າດ້ວຍສິດອໍານາດຂອງ ຄະນະບໍລິຫານງານ ສຕລ

ສິດອໍານາດ ຂອງ ຄະນະບໍລິຫານງານ ສຕລ ມີດັ່ງນີ້:

ກ) ລົງມະຕິຕັດສິນທຸກງບັນຫາ ທີ່ບໍ່ຈໍາເປັນຕ້ອງໄດ້ຜ່ານການຮັບຮອງຈາກກອງປະຊຸມໃຫຍ່ ຫຼື ບໍ່ຈໍາເປັນຕ້ອງຜ່ານອະນຸກໍາມະການຕ່າງໆຂອງ ສຕລ ທີ່ກໍານົດໄວ້ໃນກົດລະບຽບສະບັບນີ້;

ຂ) ຊີ້ນໍາການຈັດກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ແລະ ສະໄໝວິສາມັນ;

ຄ) ແຕ່ງຕັ້ງຫົວໜ້າຄະນະ, ຮອງຫົວໜ້າຄະນະ ແລະ ກໍາມະການຂອງອະນຸກໍາມະການຕ່າງໆຂອງ ສຕລ;

ງ) ແຕ່ງຕັ້ງ ຄະນະກໍາມະການສະເພາະກິດ ຫາກເຫັນວ່າມີຄວາມຈໍາເປັນ;

ຈ) ອອກລະບຽບການ ໃຫ້ແກ່ອະນຸກໍາມະການຕ່າງໆ ແລະ ຄະນະກໍາມະການສະເພາະກິດ;

ສ) ແຕ່ງຕັ້ງ ຫຼື ປົດຕໍາແໜ່ງເລຂາທິການ ສຕລ ຕາມການສະເໜີຂອງຄະນະປະຈໍາຂອງຄະນະບໍລິຫານງານ ສຕລ;

ຊ) ສະເໜີ ຜູ້ກວດສອບບັນຊີອິດສະຫຼະ ຕໍ່ກອງປະຊຸມໃຫຍ່;

ຍ) ແຕ່ງຕັ້ງຕໍາແໜ່ງແທນ ສໍາລັບຕໍາແໜ່ງວ່າງໃນຄະນະກໍາມະການອິດສະຫຼະ ຈົນກວ່າຈະເຖິງກອງປະຊຸມໃຫຍ່ຄັ້ງຖັດໄປ;

ດ) ມອບໜ້າທີ່, ປົດຕໍາແໜ່ງ ຫຼື ໂຈະ ກໍາມະການໃດໜຶ່ງຂອງອະນຸກໍາມະການຕ່າງໆຂອງ ສຕລ;

ຕ) ເຊື້ອເຊີນຜູ້ສັງເກດການທັງພາຍໃນ ແລະ ຕ່າງປະເທດ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ ສຕລ ໂດຍບໍ່ມີສິດອອກຄໍາເຫັນ ຫຼື ລົງຄະແນນສຽງ.

ຖ) ອອກລະບຽບການພາຍໃນ ແລະ ລະບຽບການແຂ່ງຂັນຕ່າງໆ ທີ່ຈັດຂຶ້ນໂດຍ ສຕລ;

ທ) ຊີ້ນໍາບັນຊາການຈັດຕັ້ງປະຕິບັດກົດລະບຽບສະບັບນີ້ ໃຫ້ມີປະສິດທິຜົນສູງສຸດ.

## ມາດຕາ 40 ວ່າດ້ວຍມະຕິຕົກລົງ ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ

1. ມະຕິຕົກລົງ ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ ຕ້ອງໄດ້ຮັບຄະແນນສຽງສອງສ່ວນສາມຂຶ້ນໄປຂອງຜູ້ມີສິດລົງຄະແນນສຽງ. ໃນກໍລະນີບໍ່ບັນລຸ ຄະແນນສຽງສອງສ່ວນສາມ, ປະທານ ມີສິດລົງຄະແນນສຽງຕັດສິນສຸດທ້າຍ. ຄະນະບໍລິຫານງານ ແມ່ນບໍ່ສາມາດລົງຄະແນນສຽງໂດຍຜ່ານຕົວແທນ ຫຼື ດ້ວຍລາຍລັກອັກສອນ.

2. ກໍາມະການໃດໜຶ່ງຂອງຄະນະບໍລິຫານງານ ສຕລ ມີສິດຖອນຕົວບໍ່ເຂົ້າຮ່ວມປະຊຸມ ຫຼື ລົງຄະແນນສຽງໃນກໍລະນີວາລະກອງປະຊຸມນັ້ນ ມີສ່ວນກ່ຽວພັນໂດຍກົງເຖິງຜົນປະໂຫຍດສ່ວນຕົວຂອງຕົນ.

3. ມະຕິຕົກລົງຕ່າງໆຂອງກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ ທຸກໆຄັ້ງ ຕ້ອງໄດ້ບັນທຶກໄວ້ໃນປຶ້ມບັນທຶກຂອງກອງປະຊຸມ.

4. ມະຕິຕົກລົງຕ່າງໆຂອງກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ ທຸກໆຄັ້ງ ມີຜົນສັກສິດນັບແຕ່ມື້ກອງປະຊຸມຮັບຮອງ ເປັນຕົ້ນໄປ ແລະ ມີຜົນບັງຄັບໃຊ້ພາຍຫຼັງອອກປະກາດ ສາມ (3) ວັນ.

## ມາດຕາ 41 ວ່າດ້ວຍຄະນະປະຈໍາຂອງຄະນະບໍລິຫານງານ ສຕລ

1. ຄະນະປະຈໍາຂອງຄະນະບໍລິຫານງານ ສຕລ ປະກອບດ້ວຍ ຫ້າ (5) ທ່ານ ເຊິ່ງມີ ປະທານ ໜຶ່ງ (1) ທ່ານທີ່ເປັນປະທານ ສຕລ ແລະ ຮອງປະທານ ສີ່ (4) ທ່ານ ຄັດເລືອກໂດຍກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ຊຶ່ງມີວາລະ ສີ່ (4) ປີ ເທົ່າກັບວາລະຂອງຄະນະບໍລິຫານງານໃນຊຸດນັ້ນ.
2. ກອງປະຊຸມຄະນະປະຈໍາ ເປີດຂຶ້ນຕາມຄວາມຈໍາເປັນຂອງວຽກງານ ໂດຍແມ່ນ ປະທານ ສຕລ ເປັນປະທານກອງປະຊຸມ. ກອງປະຊຸມຄະນະປະຈໍາ ແຕ່ລະຄັ້ງຕ້ອງມີການມະການເຂົ້າຮ່ວມເກີນຫ້າສິບສ່ວນຮ້ອຍ 50% ຂຶ້ນໄປ. ມະຕິຕົກລົງ ກອງປະຊຸມຄະນະປະຈໍາຕ້ອງໄດ້ຮັບຄະແນນສຽງເກີນຫ້າສິບສ່ວນຮ້ອຍ 50% ຂຶ້ນໄປ. ໃນກໍລະນີຄະແນນສຽງເທົ່າກັນ, ປະທານ ມີສິດລົງຄະແນນຕັດສິນສຸດທ້າຍ.
3. ໃນກໍລີນີມີວຽກງານຮີບດ່ວນ ເຊິ່ງຄະນະປະຈໍາຂອງຄະນະບໍລິຫານງານ ສຕລ ບໍ່ສາມາກເຕົ້າໂຮມກັນເພື່ອເປີດກອງປະຊຸມຂຶ້ນໄດ້ ແມ່ນໃຫ້ດໍາເນີນດ້ວຍວິທີການເປີດກອງປະຊຸມສື່ສານທາງໄກ. ມະຕິຕົກລົງຂອງກອງປະຊຸມນີ້ ແມ່ນມີຜົນສັກສິດ ນັບແຕ່ກອງປະຊຸມໄດ້ຮັບຮອງເອົາ. ປະທານ ສຕລ ຕ້ອງແຈ້ງມະຕິຕົກລົງຂອງກອງປະຊຸມຄະນະປະຈໍາ ໃຫ້ຄະນະບໍລິຫານງານ ສຕລ ຊາບທັນທີພາຍຫຼັງກອງປະຊຸມ.

## ມາດຕາ 42 ວ່າດ້ວຍປະທານ ສຕລ

1. ປະທານ ສຕລ ເປັນຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

2. ປະທານ ສຕລ ມີໜ້າທີ່ ແລະ ສິດ ດັ່ງລຸ່ມນີ້:

   ກ) ຊີ້ນໍາຈັດຕັ້ງປະຕິບັດ ທຸກໆມະຕິຕົກລົງ ຂອງກອງປະຊຸມໃຫຍ່ ສຕລ, ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ ແລະ ກອງປະຊຸມຄະນະປະຈໍາ ສຕລ.

   ຂ) ຊີ້ນໍາການເຄື່ອນໄຫວປະຕິບັດໜ້າທີ່ ຂອງກອງເລຂາ.

   ຄ) ຊີ້ນໍາອະນຸກໍາມະການຕ່າງໆ ຂອງ ສຕລ ໃຫ້ປະຕິບັດໜ້າທີ່ຢ່າງມີປະສິດທິພາບ ເພື່ອບັນລຸໜ້າທີ່ທີ່ໄດ້ກໍານົດໄວ້ໃນ ກົດລະບຽບສະບັບນີ້.

   ງ) ສ້າງສາຍພົວພັນ ລະຫວ່າງ ສຕລ ກັບສະມາຊິກ ສຕລ, ກັບການຈັດຕັ້ງລັດທຸກພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ, ກັບ FIFA, AFC, AFF ແລະ ອົງການຈັດຕັ້ງອື່ນໆ.

3. ມີສິດສະເໜີ ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ເລຂາທິການ ສຕລ.

4. ເປັນປະທານ ກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ແລະ ສະໄໝວິສາມັນ, ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ, ກອງປະຊຸມຄະນະປະຈໍາ ແລະ ເຂົ້າຮ່ວມກອງປະຊຸມອະນຸກໍາມະການຕ່າງໆ.

5. ປະທານ ມີ ໜຶ່ງ (1) ຄະແນນສຽງ ໃນຄະນະບໍລິຫານງານ. ຖ້າວ່າຄະແນນສຽງຫາກເທົ່າກັນ, ປະທານມີສິດລົງຄະແນນສຽງຕັດສິນສຸດທ້າຍ.

6. ຖ້າຫາກ ປະທານ ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ແມ່ນມອບໃຫ້ຮອງປະທານໃດໜຶ່ງ ປະຕິບັດໜ້າທີ່ແທນ.

7. ຖ້າຫາກຕໍາແໜ່ງປະທານ ວ່າງລົງ ຍ້ອນຖືກວິໄນຈາກ FIFA, AFC ຊຶ່ງຍັງຢູ່ໃນວາລະການດໍາລົງຕໍາແໜ່ງຕາມການຮັບຮອງຂອງກອງປະຊຸມໃຫຍ່ສະໄໝສາມັນຂອງ ສຕລ ແລະ ຍັງຢູ່ໃນໄລຍະການອຸທອນ, ປະທານ ແມ່ນຍັງບໍ່ໝົດໜ້າທີ່ໃນການເປັນປະທານ ແຕ່ຄະນະບໍລິຫານງານ ສຕລ ຕ້ອງໄດ້ແຕ່ງຕັ້ງຮອງປະທານ 1 ທ່ານ ຮັກສາການແທນ; ປະທານ ຈະກັບມາປະຕິບັດໜ້າທີ່ຄືນໃໝ່ໄດ້ ຫຼື ບໍ່ ແມ່ນຂຶ້ນກັບຜົນຂອງການອຸທອນ.

8. ແຕ່ງຕັ້ງ ຄະນະຄູຝຶກທີມຊາດແຕ່ລະລຸ້ນ, ວິຊາການສະເພາະດ້ານ ແລະ ຫົວໜ້າພະແນກຕ່າງໆຂອງ ສຕລ.

9. ສິດ ແລະ ໜ້າທີ່ເພີ່ມເຕີມອື່ນໆຕາມທີ່ກໍານົດໄວ້ ໃນລະບຽບການຄຸ້ມຄອງ-ບໍລິຫານ ຂອງ ສຕລ.

## ມາດຕາ 43 ວ່າດ້ວຍການຕາງໜ້າ ແລະ ລາຍເຊັນ

ປະທານ ຕາງໜ້າໃຫ້ ສຕລ ໂດຍຖືກຕ້ອງຕາມກົດໝາຍ ແລະ ມີສິດລົງລາຍເຊັນ ໃນນາມ ສຕລ. ໃນກໍລະນີທີ່ປະທານ ຕິດທຸລະອື່ນ ປະທານ ຕ້ອງເຮັດໃບມອບສິດໃຫ້ກໍາມະການຄະນະປະຈໍາ ໜຶ່ງ (1) ທ່ານ ເປັນຜູ້ຕາງໜ້າຕົນ.

## ມາດຕາ 44 ວ່າດ້ວຍກອງເລຂາ

ກອງເລຂາ ແມ່ນໜ່ວຍງານປະຈຳການຂອງ ສຕລ ເຊິ່ງມີໜ້າທີ່ປະຕິບັດວຽກງານບໍລິຫານທັງໝົດ ຂອງ ສຕລ ພາຍໃຕ້ການຊີ້ນຳຂອງເລຂາທິການ ແລະ ພາຍໃຕ້ກົດລະບຽບຂອງ ສຕລ.

## ມາດຕາ 45 ວ່າດ້ວຍເລຂາທິການ ສຕລ

1. ເລຂາທິການ ສຕລ ແມ່ນຫົວໜ້າກອງເລຂາ, ເປັນຜູ້ຈັດການ ແລະ ບໍລິຫານວຽກງານປະຈຳວັນ ຂອງ ສຕລ.

2. ເລຂາທິການ ສຕລ ໄດ້ຮັບການແຕ່ງຕັ້ງຈາກປະທານ ສຕລ ແລະ ເຄື່ອນໄຫວຕາມກົດລະບຽບຂອງ ສຕລ.

3. ໜ້າທີ່ ແລະ ສິດ ຂອງເລຂາທິການ ສຕລ:

   ກ) ຈັດຕັ້ງປະຕິບັດທຸກງານມະຕິຕົກລົງ ຂອງກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ແລະ ສະໄໝວິສາມັນ, ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ, ກອງປະຊຸມຄະນະປະຈຳ ຕາມການຊີ້ນຳຂອງ ປະທານ ສຕລ;

   ຂ) ກະກຽມເນື້ອໃນກອງປະຊຸມ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ການດຳເນີນກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ແລະ ສະໄໝວິສາມັນ, ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ ສຕລ, ກອງປະຊຸມຄະນະປະຈຳ, ກອງປະຊຸມອະນຸກຳມະການຕ່າງໆ ແລະ ກອງປະຊຸມຄະນະກຳມະການອິດສະຫຼະ;

   ຄ) ເຂົ້າຮ່ວມຕິດຕາມ, ບັນທຶກ ແລະ ຮຽບຮຽງບົດບັນທຶກ ບັນດາກອງປະຊຸມທີ່ລະບຸຢູ່ໃນ ຂໍ້ ຂ ຂອງ ມາດຕາ 45 ນີ້;

   ງ) ຄຸ້ມຄອງ-ບໍລິຫານ ຊັບສິນ ແລະ ລະບົບບັນຊີ ຂອງ ສຕລ ;

   ຈ) ຮ່າງຈົດໝາຍທາງການ ຂອງ ສຕລ;

   ສ) ສ້າງສາຍພົວພັນ ລະຫວ່າງ ສຕລ ກັບສະມາຊິກ ສຕລ, ກັບການຈັດຕັ້ງລັດທຸກພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ, ກັບ FIFA, AFC, AFF ແລະ ອົງການຈັດຕັ້ງອື່ນໆ;

   ຊ) ປະກອບສ້າງໜ່ວຍງານກອງເລຂາ;

ຍ) ແຕ່ງຕັ້ງ ແລະ ປົດຕໍາແໜ່ງພະນັກງານທີ່ເຮັດວຽກຢູ່ ກອງເລຂາ ໂດຍໄດ້ຮັບການເຫັນດີຈາກ ປະທານ ສຕລ;

ດ) ສະເໜີຄວາມຕ້ອງການດ້ານບຸກຄະລາກອນ ລະດັບບໍລິຫານ ຫຼື ຫົວໜ້າພະແນກ ເພື່ອໃຫ້ປະທານ ສຕລ ພິຈາລະນາແຕ່ງຕັ້ງ;

ຕ) ສະໜອງ ຂໍ້ມູນອັນຈໍາເປັນກ່ຽວກັບຜູ້ສະໝັກຮັບເລືອກຕັ້ງເຂົ້າໃນໜ່ວຍງານຕ່າງໆຂອງ ສຕລ ໃຫ້ຄະນະກໍາມະການເລືອກຕັ້ງ;

ຖ) ສິດ ແລະ ໜ້າທີ່ເພີ່ມເຕີມອື່ນໆຕາມທີ່ກໍານົດໄວ້ ໃນລະບຽບການຄຸ້ມຄອງ-ບໍລິຫານ ຂອງ ສຕລ.

4. ເລຂາທິການ ບໍ່ສາມາດເປັນຜູ້ຕາງໜ້າໃຫ້ແກ່ບັນດາສະມາຊິກ ສຕລ ແລະ ໜ່ວຍງານຕ່າງໆຂອງ ສຕລ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ແລະ ສະໄໝວິສາມັນ ຫຼື ເປັນກໍາມະການຂອງອະນຸກໍາມະການຕ່າງໆ ໃນ ສຕລ.

## ມາດຕາ 46 ວ່າດ້ວຍອະນຸກຳມະການຕ່າງໆ

1. ອະນຸກຳມະການ ສຕລ ປະກອບດ້ວຍ ເກົ້າ (9) ໜ່ວຍງານດັ່ງນີ້:

   1.1 ອະນຸກຳມະການ ການເງິນ;

   1.2 ອະນຸກຳມະການ ຈັດການແຂ່ງຂັນ;

   1.3 ອະນຸກຳມະການ ເຕັກນິກວິທະຍາ ແລະ ພັດທະນາກິລາບານເຕະ;

   1.4 ອະນຸກຳມະການ ນິຕິກຳ;

   1.5 ອະນຸກຳມະການ ກຳມະການຕັດສິນ;

   1.6 ອະນຸກຳມະການ ບານເຕະຍິງ;

   1.7 ອະນຸກຳມະການ ການຕະຫຼາດ;

   1.8 ອະນຸກຳມະການ ການແພດ;

   1.9 ອະນຸກຳມະການ ສື່ມວນຊົນ.

2. ຫົວໜ້າ ແລະ ຮອງຫົວໜ້າອະນຸກຳມະການຕ່າງໆ ຕ້ອງເປັນກຳມະການຂອງຄະນະບໍລິຫານງານ ສຕລ ໂດຍຖືກຮັບຮອງຈາກຄະນະບໍລິຫານງານ ແລະ ຖືກແຕ່ງຕັ້ງໂດຍ ປະທານ ສຕລ.

3. ຫົວໜ້າ ແລະ ຮອງຫົວໜ້າຂອງແຕ່ລະອະນຸກຳມະການ ຕ້ອງເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ ຕາມແຜນການໃນແຕ່ລະໄລຍະ ແລະ ຕາມກົດລະບຽບຂອງ ສຕລ.

4. ຫົວໜ້າຂອງແຕ່ລະອະນຸກຳມະການ ຕ້ອງຮ່ວມກັບກອງເລຂາ ກຳນົດວັນເວລາຈັດກອງປະຊຸມ ແຕ່ລະອະນຸກຳມະການ ເພື່ອລາຍງານໃຫ້ຄະນະບໍລິຫານງານ ສຕລ ຮັບຮອງ.

5. ອະນຸກຳມະການຕ່າງໆ ມີສິດແຕ່ງຕັ້ງໜ່ວຍງານສະເພາະກິດ ເພື່ອແກ້ໄຂບັນຫາທີ່ຮີບດ່ວນ ຖ້າເຫັນວ່າມີ ຄວາມຈຳເປັນ. ພາຍຫຼັງທີ່ໄດ້ຮັບອະນຸມັດຈາກຄະນະປະຈຳ ສຕລ ແລ້ວ. ເມື່ອສິ້ນສຸດ ການປະຕິບັດໜ້າທີ່ສະເພາະກິດນີ້ແລ້ວ ໜ່ວຍງານດັ່ງກ່າວ ຕ້ອງລາຍງານຕໍ່ອະນຸກຳມະການທີ່ກ່ຽວຂ້ອງ ແລະ ຄະນະປະຈຳ ສຕລ ຕາມລຳດັບ. ຈາກນັ້ນ ໜ່ວຍງານດັ່ງກ່າວ ແມ່ນສິ້ນສຸດໜ້າທີ່.

6. ແຕ່ລະອະນຸກຳມະການ ສຕລ ມີສິດສະເໜີຕໍ່ ຄະນະບໍລິຫານງານ ສຕລ ກ່ຽວກັບການດັດແກ້ກົດລະບຽບຂອງ ສຕລ ທີ່ກ່ຽວຂ້ອງກັບອະນຸກຳມະການນັ້ນໆ.

## ມາດຕາ 47 ວ່າດ້ວຍອະນຸກຳມະການ ການເງິນ

ອະນຸກຳມະການ ການເງິນ ເປັນໜ່ວຍງານຕິດຕາມການບໍລິຫານດ້ານການເງິນ ຂອງ ສຕລ, ມີໜ້າທີ່ສະເໜີໃຫ້ຄະນະບໍລິຫານງານ ສຕລ ພິຈາລະນາ ແລະ ຮັບຮູ້ກ່ຽວກັບບັນຫາຕ່າງໆທາງດ້ານການເງິນ ແລະ ການບໍລິຫານດ້ານຊັບສິນ. ອະນຸກຳມະການ ການເງິນ ຕ້ອງກວດກາ ແລະ ສະຫຼຸບສັງລວມ ແຜນງົບປະມານ ແລະ ການໃຊ້ຈ່າຍງົບປະມານຂອງແຕ່ລະອະນຸກຳມະການ ກໍ່ຄືຂອງ ສຕລ ພ້ອມທັງໃບແຈ້ງການຖານະການເງິນ ເຊິ່ງກະກຽມໂດຍ ພະແນກການເງິນ ດ້ວຍການສົມທົບກັບເລຂາທິການ ເພື່ອສະເໜີຂໍອະນຸມັດຈາກຄະນະບໍລິຫານງານ ສຕລ. ອະນຸກຳມະການ ການເງິນ ປະກອບດ້ວຍ ຫົວຫນ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ.

## ມາດຕາ 48 ວ່າດ້ວຍອະນຸກຳມະການ ຈັດການແຂ່ງຂັນ

ອະນຸກຳມະການ ຈັດການແຂ່ງຂັນ ແມ່ນໜ່ວຍງານຮັບຜິດຊອບຈັດການແຂ່ງຂັນກິລາບານເຕະ, ຟຸດຊໍ ແລະ ບານເຕະຫາດຊາຍ ທັງຍິງ ແລະ ຊາຍ ໃນທຸກລະດັບ ພາຍໃນ ສຕລ ໃຫ້ສອດຄ່ອງກັບ ຂໍ້ກຳນົດ ຂອງກົດລະບຽບສະບັບນີ້ ແລະ ລະບຽບການຕ່າງໆ ທີ່ບັງຄັບໃຊ້ ກັບ ການແຂ່ງຂັນຂອງ ສຕລ. ອະນຸກຳມະການ ຈັດການແຂ່ງຂັນ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ຫ້າ (5) ທ່ານ.

## ມາດຕາ 49 ວ່າດ້ວຍອະນຸກຳມະການ ເຕັກນິກວິທະຍາ ແລະ ພັດທະນາກິລາບານເຕະ

ອະນຸກຳມະການ ເຕັກນິກວິທະຍາ ແລະ ພັດທະນາກິລາບານເຕະ ເປັນໜ່ວຍງານວິເຄາະກ່ຽວກັບ ຄວາມຕ້ອງການຂັ້ນພື້ນຖານ ຂອງການຝຶກຊ້ອມກິລາບານເຕະ ແລະ ການພັດທະນາເຕັກນິກວິທະຍາ. ອະນຸກຳມະການ ເຕັກນິກວິທະຍາ ແລະ ພັດທະນາກິລາບານເຕະ ມີໜ້າທີ່ຮັບຜິດຊອບ ຄົ້ນຄວ້ານຳສະເໜີ ຍຸດທະສາດພັດທະນາກິລາບານເຕະຂອງ ສຕລ, ວາງແຜນພັດທະນາກິລາບານເຕະໃນແຕ່ລະໄລຍະ ເພື່ອນຳສະເໜີຂໍອະນຸມັດຈາກຄະນະບໍລິຫານງານ ສຕລ. ຊີ້ນຳບັນດາສະມາຊິກຂອງ ສຕລ ເພື່ອປະຕິບັດຕາມຍຸດທະສາດ ແລະ ແຜນພັດທະນາທີ່ຄະນະບໍລິຫານງານ ສຕລ ໄດ້ຮັບຮອງແລ້ວ ໃຫ້ປະກົດຜົນເປັນຈິງ.

ອະນຸກຳມະການເຕັກນິກວິທະຍາ ແລະ ພັດທະນາກິລາບານເຕະ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ຫ້າ (5) ທ່ານ. ພ້ອມກັນນັ້ນ ກໍ່ອາດຈະມີທີ່ປຶກສາຕາມຄວາມຕ້ອງການທີ່ຈຳເປັນ.

## ມາດຕາ 50 ວ່າດ້ວຍອະນຸກຳມະການ ນິຕິກຳ

ອະນຸກຳມະການ ນິຕິກຳ ເປັນໜ່ວຍງານໃຫ້ຄຳແນະນຳ ກ່ຽວກັບ ກົດໝາຍ, ກົດລະບຽບ, ກະຕິກາຕ່າງໆທີ່ກ່ຽວຂ້ອງກັບກິລາບານເຕະ ເຊິ່ງອາດສົ່ງຜົນກະທົບ ຕໍ່ຜົນປະໂຫຍດຂອງ ສຕລ. ອະນຸກຳມະການ ນິຕິກຳ ມີໜ້າທີ່ຄົ້ນຄວ້າຄຳແນະນຳ ທາງກົດໝາຍ ຫຼື ຄົ້ນຄວ້າທະນາຍຄວາມ ແລະ ຊ່ວຍໃຫ້ຄຳເຫັນກ່ຽວກັບຄຳແນະນຳ ທີ່ໄດ້ຮັບຈາກທະນາຍຄວາມທາງດ້ານກົດໝາຍ ຕໍ່ຄະນະບໍລິຫານງານ, ປະທານ ຫຼື ເລຂາທິການ. ອະນຸກຳມະການ ນິຕິກຳ ແລະ ສະຖານະນັກກິລາ ປະກອບດ້ວຍ ຫົວຫນ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ.

## ມາດຕາ 51 ວ່າດ້ວຍອະນຸກຳມະການ ກຳມະການຕັດສິນ

ອະນຸກຳມະການ ກຳມະການຕັດສິນ ເປັນໜ່ວຍງານຮັບຜິດຊອບຈັດຕັ້ງປະຕິບັດ ກະຕິກາກິລາບານເຕະ (Laws of the Game). ອະນຸກຳມະການ ກຳມະການຕັດສິນ ມີຫນ້າທີ່ແຕ່ງຕັ້ງ ກຳມະການຕັດສິນ ໃນທຸກໆລາຍການການແຂ່ງຂັນ ທີ່ ສຕລ ຈັດຂຶ້ນ, ແກ້ໄຂບັນຫາທີ່ກ່ຽວຂ້ອງກັບ ການຕັດສິນ ແລະ ຈັດການເຝິກອົບຮົມ ກຳມະການຕັດສິນ. ອະນຸກຳມະການ ກຳມະການຕັດສິນ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ຫ້າ (5) ທ່ານ.

## ມາດຕາ 52 ວ່າດ້ວຍອະນຸກຳມະການ ບານເຕະຍິງ

ອະນຸກຳມະການ ບານເຕະຍິງ ເປັນໜ່ວຍງານຮັບຜິດຊອບພັດທະນາທຸກໆກິດຈະກຳ ທີ່ກ່ຽວຂ້ອງກັບບານເຕະຍິງ. ອະນຸກຳມະການ ບານເຕະຍິງ ປະກອບດ້ວຍ ຫົວຫນ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ.

## ມາດຕາ 53 ວ່າດ້ວຍອະນຸກຳມະການ ການຕະຫຼາດ

ອະນຸກຳມະການ ການຕະຫຼາດ ເປັນໜ່ວຍງານຄົ້ນຄວ້າແຜນການພົວພັນກັບບັນດາຜູ້ສະໜັບສະໜູນ, ຜູ້ອຸປະຖຳ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆທັງພາຍໃນ ແລະ ຕ່າງປະເທດ ເພື່ອສະເໜີຂໍອະນຸມັດຈາກຄະນະບໍລິຫານງານ. ອະນຸກຳມະການ ການຕະຫຼາດ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ.

## ມາດຕາ 54 ວ່າດ້ວຍອະນຸກຳມະການ ການແພດ

ອະນຸກຳມະການ ການແພດ ເປັນໜ່ວຍງານຄົ້ນຄວ້າວາງແຜນກ່ຽວກັບຄວາມຕ້ອງການດ້ານການແພດ ຮັບໃຊ້ກິລາບານເຕະ; ມີໜ້າທີ່ເຜີຍແຜ່ວຽກງານການແພດໃນກິລາບານເຕະໃຫ້ສະໂມສອນທີ່ເປັນສະມາຊິກ ສຕລ ຮັບຮູ້ເຖິງຄວາມສຳຄັນ ແລະ ຈຳເປັນຂອງວຽກງານການແພດ ລວມທັງບັນຫາສານກະຕຸ້ນ ທີ່ຕ້ອງຫ້າມ; ພ້ອມກັນນັ້ນ ກໍ່ມີໜ້າທີ່ປະສານສົມທົບກັບຂະແໜງການສາທາລະນະສຸກ ເພື່ອຂໍການສະໜັບສະໜູນດ້ານການແພດທີ່ຈຳເປັນ. ອະນຸກຳມະການ ການແພດ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ.

## ມາດຕາ 55 ວ່າດ້ວຍອະນຸກຳມະການ ສື່ມວນຊົນ

ອະນຸກຳມະການ ສື່ມວນຊົນ ເປັນໜ່ວຍງານເຜີຍແຜ່ພາລະບົດບາດ ແລະ ກິດຈະກຳຕ່າງໆ ຂອງ ສຕລ ໂດຍຜ່ານຊ່ອງທາງສື່ມວນຊົນຕ່າງໆ. ອະນຸກຳມະການ ສື່ມວນຊົນ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ.

## ມາດຕາ 56 ວ່າດ້ວຍອະນຸກຳມະການສະເພາະກິດ

ອະນຸກຳມະການສະເພາະກິດ ແມ່ນໜ່ວຍງານທີ່ສ້າງຕັ້ງຂຶ້ນ ເພື່ອແກ້ໄຂບັນຫາທີ່ຮີບດ່ວນໃດໜຶ່ງ ຕາມເຫັນຈຳເປັນ. ອະນຸກຳມະການສະເພາະກິດນີ້ ແມ່ນແຕ່ງຕັ້ງໂດຍຄະນະປະຈຳ ສຕລ ເຊິ່ງປະກອບດ້ວຍຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ. ເມື່ອສິ້ນສຸດການປະຕິບັດໜ້າທີ່ສະເພາະກິດນີ້ແລ້ວ ໜ່ວຍງານດັ່ງກ່າວ ຕ້ອງລາຍງານຕໍ່ອະນຸກຳມະການທີ່ກ່ຽວຂ້ອງ ແລະ ຄະນະປະຈຳ ສຕລ ຕາມລຳດັບ. ຈາກນັ້ນ ໜ່ວຍງານດັ່ງກ່າວ ແມ່ນສິ້ນສຸດໜ້າທີ່.

## ມາດຕາ 57 ວ່າດ້ວຍຄະນະກຳມະການກວດເງື່ອນໄຂອອກໃບອະນຸຍາດສະໂມສອນ (Club Licensing Bodies)

ຄະນະກຳມະການກວດເງື່ອນໄຂອອກໃບອະນຸຍາດສະໂມສອນ ເປັນໜ່ວຍງານຮັບຜິດຊອບ ການກວດເງື່ອນໄຂອອກໃບອະນຸຍາດສະໂມສອນ ຕາມລະບຽບຂອງ ສຕລ ແລະ ລະບຽບ ຂອງ AFC. ຄະນະກຳມະການນີ້ ປະກອບດ້ວຍ ສອງ (2) ໜ່ວຍງານຄື:

1. ໜ່ວຍງານກວດເງື່ອນໄຂອອກໃບອະນຸຍາດຂັ້ນຕົ້ນ (First Instance Body) ແມ່ນໜ່ວຍງານກວດກາທຸກໆເງື່ອນໄຂການອອກໃບອະນຸຍາດສະໂມສອນ ທີ່ ສຕລ ແລະ AFC ໄດ້ວາງອອກ. ໜ່ວຍງານນີ້ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ (ຕ້ອງເປັນນັກກົດໝາຍ), ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ (ໜຶ່ງໃນນັ້ນຕ້ອງເປັນນັກກວດສອບບັນຊີ).
2. ໜ່ວຍງານອຸທອນ (Appeal Body) ແມ່ນໜ່ວຍງານກວດກາການຍື່ນອຸທອນຂອງສະໂມສອນບານເຕະ ໃນກໍລະນີໜ່ວຍງານອອກໃບອະນຸຍາດຂັ້ນຕົ້ນ (First Instance Body) ປະຕິເສດການອອກໃບອະນຸຍາດສະໂມສອນ ເນື່ອງຈາກປະກອບເອກະສານບໍ່ຄົບຕາມເງື່ອນໄຂ. ໜ່ວຍງານນີ້ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ (ຕ້ອງເປັນນັກກົດໝາຍ), ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການຢ່າງໜ້ອຍ ສາມ (3) ທ່ານ (ໜຶ່ງໃນນັ້ນຕ້ອງເປັນນັກກວດສອບບັນຊີ).

## ພາກທີ V

## ວ່າດ້ວຍຄະນະກຳມະການອິດສະຫຼະ

### ມາດຕາ 58 ວ່າດ້ວຍຄະນະກຳມະການອິດສະຫຼະ

ຄະນະກຳມະການອິດສະຫຼະ ແມ່ນຄະນະໜຶ່ງ ເຊິ່ງປະຕິບັດໜ້າທີ່ຂອງຕົນ ທັງໝົດຢ່າງເປັນອິດສະຫຼະ ເພື່ອຜົນປະໂຫຍດຂອງ ສຕລ ຕາມກົດລະບຽບຕ່າງໆຂອງ ສຕລ, FIFA, AFC, AFF.

### ມາດຕາ 59 ວ່າດ້ວຍຄະນະກຳມະການ ກວດສອບທົ່ວໄປ

1. ຄະນະກຳມະການກວດສອບທົ່ວໄປ ມີຫນ້າທີ່ກວດສອບຄວາມຖືກຕ້ອງ, ຄວາມສຳເລັດ ແລະ ຄວາມເຊື່ອຖື ຂອງການປະຕິບັດແຜນການຂອງໜ່ວຍງານຕ່າງໆທີ່ຂຶ້ນກັບ ສຕລ. ພ້ອມກັນນັ້ນ ກໍ່ມີໜ້າທີ່ລາຍງານຜົນການກວດສອບທົ່ວໄປ ແລະ ຂໍ້ສະເໜີແນະຕ່າງໆ ໃຫ້ຄະນະບໍລິຫານງານ ສຕລ. ຄະນະກຳມະການ ແລະ ກວດສອບທົ່ວໄປ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກຳມະການ ໜຶ່ງ (1) ທ່ານ. ຄະນະກຳມະການ ກວດສອບທົ່ວໄປ ຕ້ອງມີຄວາມຮູ້ ແລະ ປະສົບການ ທາງດ້ານການເງິນ ແລະ/ຫຼື ລະບຽບການ ແລະ ບັນຫາທາງດ້ານກົດໝາຍ ແລະ ຕ້ອງບໍ່ມີສ່ວນກ່ຽວຂ້ອງກັບຄຳຕັດສິນໃດໜຶ່ງທີ່ຈະສົ່ງຜົນກະທົບຕໍ່ການເຄື່ອນໄຫວ ຂອງ ສຕລ.

2. ລາຍລະອຽດກ່ຽວກັບຄວາມຮັບຜິດຊອບ, ການປະສານງານພາຍໃນ ແລະ ຂັ້ນຕອນການດຳເນີນງານຂອງຄະນະກຳມະການດັ່ງກ່າວ ຕ້ອງໃຫ້ສອດຄ່ອງກັບກົດລະບຽບ ຂອງ ສຕລ ສະບັບນີ້.

3. ຫົວໜ້າ, ຮອງຫົວໜ້າ ແລະ ກຳມະການ ຂອງຄະນະກຳມະການກວດສອບທົ່ວໄປ ຕ້ອງໄດ້ຮັບການແຕ່ງຕັ້ງໂດຍ ກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ໂດຍມີກຳນົດ ສີ່ (4) ປີ ແລະ ມີພຽງແຕ່ ກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ເທົ່ານັ້ນ ຈຶ່ງສາມາດຍົກເລີກຕຳແໜ່ງດັ່ງກ່າວ. ບັນດາທ່ານໃນຄະນະກຳມະການດັ່ງກ່າວ ບໍ່ສາມາດເປັນກຳມະການຂອງ ຄະນະກຳມະການອື່ນໆທີ່ຂຶ້ນກັບ ສຕລ ແລະ ຕ້ອງປະຕິບັດ ໜ້າທີ່ດ້ວຍຄວາມເປັນເອກະລາດ ທີ່ກຳນົດໄວ້ໃນ ວັກ 4 ຂອງ ມາດຕານີ້.

4. ຫົວໜ້າ, ຮອງຫົວໜ້າ ແລະ ກຳມະການ ຂອງຄະນະກຳມະການກວດສອບທົ່ວໄປ ບໍ່ໃຫ້ມີຕຳແໜ່ງບໍລິຫານໃດໆ ຢູ່ ສຕລ, ບໍ່ສາມາດເປັນສະມາຊິກຂອງ ສຕລ ຫຼື ສະໂມສອນ. ໃນໄລຍະເວລາ ສີ່ (4) ປີ ກ່ອນທີ່ຈະເຂົ້າຮັບຕຳແໜ່ງນີ້, ບັນດາທ່ານເຫຼົ່ານັ້ນ ແມ່ນບໍ່ມີ ຫຼື ບໍ່ເຄີຍມີຄວາມສຳພັນທາງທຸລະກິດ ແລະ ບໍ່ເຄີຍເປັນຜູ້ສະໜັບສະໜູນທາງດ້ານການເງິນໃຫ້ ສຕລ ມາກ່ອນ.

5. ກໍລະນີ ຫົວໜ້າ, ຮອງຫົວໜ້າ ແລະ ກໍາມະການ ຂອງຄະນະກໍາມະການກວດສອບທົ່ວໄປ ຫາກຢຸດເຊົາການປະຕິບັດໜ້າທີ່ຂອງຕົນ ໂດຍຕົນເອງ, ໃຫ້ຄະນະບໍລິຫານງານ ສຕລ ແຕ່ງຕັ້ງຜູ້ໃໝ່ມາດໍາລົງຕໍາແໜ່ງແທນ ຈົນກວ່າຈະເຖິງເວລາດໍາເນີນກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ຄັ້ງຖັດໄປ.

## ມາດຕາ 60 ວ່າດ້ວຍຄະນະກໍາມະການ ການເລືອກຕັ້ງ

1. ຄະນະກໍາມະການ ການເລືອກຕັ້ງ ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງການເລືອກຕັ້ງ ແລະ ກວດກາຂັ້ນຕອນການເລືອກຕັ້ງ ຕາມກົດລະບຽບວ່າດ້ວຍການເລືອກຕັ້ງຂອງ ສຕລ.

2. ຫົວໜ້າ, ຮອງຫົວໜ້າ ແລະ ກໍາມະການ ຂອງ ຄະນະກໍາມະການ ການເລືອກຕັ້ງ ໃຫ້ປະຕິບັດໜ້າທີ່ດ້ວຍຄວາມເປັນເຈົ້າຕົນເອງ.

3. ຄະນະກໍາມະການ ການເລືອກຕັ້ງ ປະກອບດ້ວຍ ຫົວໜ້າ ໜຶ່ງ (1) ທ່ານ, ຮອງຫົວໜ້າ ໜຶ່ງ (1) ທ່ານ ແລະ ກໍາມະການຢ່າງໜ້ອຍ ສາມ (3) ທ່ານ.

## ມາດຕາ 61 ວ່າດ້ວຍຄະນະກໍາມະການ ວິໄນ ແລະ ຄະນະກໍາມະການ ອຸທອນ

1. ຄະນະກໍາມະການ ວິໄນ ແລະ ຄະນະກໍາມະການ ອຸທອນ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ກໍາມະການ ຕາມຈໍານວນທີ່ຖືກແຕ່ງຕັ້ງ ໂດຍຄະນະບໍລິຫານງານ ສຕລ. ບັນດາທ່ານດັ່ງກ່າວ ຕ້ອງເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການສະເພາະດ້ານທີ່ກ່ຽວຂ້ອງ. ຫົວໜ້າ ຂອງຄະນະກໍາມະການດັ່ງກ່າວ ຕ້ອງມີຄຸນວຸດທິທາງດ້ານກົດໝາຍ.

2. ຄະນະກໍາມະການ ວິໄນ ແລະ ຄະນະກໍາມະການ ອຸທອນ ມີວາລະດໍາລົງຕໍາແໜ່ງສະໄໝລະ ສີ່ (4) ປີ ເຊິ່ງຖືກເລືອກຕັ້ງ ຫຼື ຢຸດເຊົາຕໍາແໜ່ງໄດ້ ໂດຍກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ຫຼື ສະໄໝວິສາມັນ ເທົ່ານັ້ນ ຕາມການສະເໜີຂອງ ຄະນະບໍລິຫານງານ ສຕລ; ບັນດາທ່ານໃນຄະນະກໍາມະການດັ່ງກ່າວ ບໍ່ສາມາດເປັນກໍາມະການ ຂອງ ຄະນະກໍາມະການ ຫຼື ອະນຸກໍາມະການອື່ນໆ ຂອງ ສຕລ;

3. ຫົວໜ້າ, ຮອງຫົວໜ້າ ແລະ ກໍາມະການ ຂອງຄະນະກໍາມະການ ວິໄນ ແລະ ຄະນະກໍາມະການ ອຸທອນ ຕ້ອງປະຕິບັດໜ້າທີ່ດ້ວຍຄວາມເປັນເຈົ້າຕົນເອງ.

4. ໃນກໍລະນີຕໍາແໜ່ງ ຫົວໜ້າ, ຮອງຫົວໜ້າ ແລະ ກໍາມະການ ຂອງຄະນະກໍາມະການດັ່ງກ່າວ ຫາກວ່າງລົງ , ໃຫ້ຄະນະບໍລິຫານງານ ສຕລ ແຕ່ງຕັ້ງຜູ້ໃໝ່ປ່ຽນແທນ ແລ້ວນໍາສະເໜີຂໍການຮັບຮອງຈາກກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ຫຼື ສະໄໝວິສາມັນ ຄັ້ງຖັດໄປ.

5. ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງຄະນະກຳມະການດັ່ງກ່າວ ຕ້ອງກຳນົດໄວ້ໃນ ກົດຂໍ້ບັງຄັບດ້ານວິໄນ ຂອງ ສຕລ.

**ກ. ໜ້າທີ່ ແລະ ສິດ ຂອງຄະນະກຳມະການວິໄນ:**

1. ຄະນະກຳມະການວິໄນ ມີໜ້າທີ່ ແລະ ສິດ ປະກາດການລົງວິໄນ ຕາມທີ່ກຳນົດໄວ້ ໃນກົດລະບຽບສະບັບນີ້ ແລະ ກົດຂໍ້ບັງຄັບດ້ານວິໄນ ຂອງ ສຕລ ຕໍ່ ບັນດາສະມາຊິກ, ເຈົ້າໜ້າທີ່, ນັກກິລາ, ສະໂມສອນ, ຕົວແທນການແຂ່ງຂັນ ແລະ ຕົວແທນນັກກິລາ.

2. ການລົງວິໄນ ໃນຂໍ້ 1 ຂ້າງເທິງນີ້ ຖືວ່າເປັນຄຳຕັດສິນທີ່ສາມາດນຳໃຊ້ໄດ້ ນອກຈາກການໂຈະຊົ່ວຄາວ ແລະ ການປົດອອກຈາກ ການເປັນສະມາຊິກ ສຕລ ຊຶ່ງແມ່ນອຳນາດ ຂອງກອງປະຊຸມໃຫຍ່ ສຕລ ແລະ ຄະນະບໍລິຫານງານ ສຕລ.

3. ຄະນະກຳມະການວິໄນ ຈະເປີດກອງປະຊຸມຂຶ້ນໄດ້ ກໍຕໍ່ເມື່ອມີອົງປະຊຸມຄົບຈຳນວນ ແລະ ຄຳຕັດສິນຂອງກອງປະຊຸມດັ່ງກ່າວ ຕ້ອງໄດ້ຮັບຄະແນນສຽງສະໜັບສະໜູນ ສອງສ່ວນສາມ (2/3) ຂຶ້ນໄປ.

4. ຄະນະບໍລິຫານງານ ສຕລ ເປັນຜູ້ອອກ ກົດຂໍ້ບັງຄັບດ້ານວິໄນ ຂອງ ສຕລ ອີງໃສ່ກົດຂໍ້ບັງຄັບດ້ານວິໄນ ຂອງ FIFA ແລະ AFC.

**ຂ. ໜ້າທີ່ ແລະ ສິດ ຂອງຄະນະກຳມະການອຸທອນ:**

1. ຄະນະກຳມະການອຸທອນ ມີໜ້າທີ່ ແລະ ສິດ ພິຈາລະນາຄຳອຸທອນ ຂອງຜູ້ຖືກລົງວິໄນ ຕາມຄຳຕັດສິນຂອງຄະນະກຳມະການວິໄນ.

2. ຄະນະກຳມະການອຸທອນ ຈະເປີດກອງປະຊຸມຂຶ້ນໄດ້ ກໍຕໍ່ເມື່ອມີອົງປະຊຸມຄົບຈຳນວນ ແລະ ຄຳຕັດສິນຂອງກອງປະຊຸມດັ່ງກ່າວ ຕ້ອງໄດ້ຮັບຄະແນນສຽງສະໜັບສະໜູນ ສອງສ່ວນສາມ (2/3) ຂຶ້ນໄປ.

3. ໃນກໍລະນີຜູ້ຖືກລົງວິໄນ ຫາກບໍ່ພໍໃຈຕໍ່ຄຳຕັດສິນຂອງຄະນະກຳມະການອຸທອນຂອງ ສຕລ ຜູ້ກ່ຽວສາມາດຂໍອຸທອນໄປຫາ ສານກິລາໂລກ (CAS) ໃນເມືອງໂລຊານ ປະເທດສະວິດເຊີແລນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບສະບັບນີ້.

## ພາກທີ VI

## ວ່າດ້ວຍມາດຕະການທາງດ້ານວິໄນ

### ມາດຕາ 62 ວ່າດ້ວຍຮູບການທາງດ້ານວິໄນ

ຮູບການທາງດ້ານວິໄນ ຂອງ ສຕລ ມີດັ່ງນີ້:

1. ສຳລັບ ບຸກຄົນ ແລະ ນິຕິບຸກຄົນ:

ກ. ຕິຕຽນ;

ຂ. ກ່າວເຕືອນຄວາມຜິດ;

ຄ. ປັບໄໝ;

ງ. ຖອນຄືນລາງວັນ;

2. ສຳລັບ ບຸກຄົນ:

ກ. ກ່າວເຕືອນຄວາມຜິດ;

ຂ. ໄລ່ອອກ;

ຄ. ໂຈະການລົງແຂ່ງຂັນ;

ງ. ຫ້າມເຂົ້າຫ້ອງປ່ຽນເຄື່ອງນັກກິລາ ແລະ/ຫຼື ໄປນັ່ງຮ່ວມກັບນັກກິລາສຳຮອງ;

ຈ. ຫ້າມເຂົ້າໃນສະໜາມກິລາ;

ສ. ຫ້າມມີສ່ວນຮ່ວມໃນທຸກໆກິດຈະກຳທີ່ກ່ຽວຂ້ອງກັບກິລາບານເຕະ;

ຊ. ໃຫ້ບໍລິການດ້ານສາທາລະນະ;

ຍ. ອົບຮົມປັບປຸງປົວແປງຕົນເອງ.

3. ສຳລັບ ນິຕິບຸກຄົນ:

ກ. ຫ້າມນຳເອົານັກກິລາເຂົ້າເພີ່ມ;

ຂ. ອະນຸຍາດໃຫ້ແຂ່ງຂັນ ໂດຍບໍ່ໃຫ້ມີຜູ້ຊົມ;

ຄ. ອະນຸຍາດໃຫ້ແຂ່ງຂັນ ຢູ່ສະໜາມກາງ;

ງ. ຫ້າມລົງແຂ່ງຂັນ ໃນສະໜາມໃດໜຶ່ງ;

ຈ. ລົບລ້າງຜົນການແຂ່ງຂັນ;

ສ. ໄລ່ອອກຈາກການແຂ່ງຂັນ;

ຊ. ປັບໄໝ;

ຍ. ຕັດຄະແນນ;

ດ. ໃຫ້ລົງໄປແຂ່ງຂັນ ໃນລີກທີ່ຕ່ຳກວ່າ;

ຕ. ແຂ່ງຂັນຄືນໃໝ່.

## ພາກທີ VII

## ວ່າດ້ວຍຄະນະກຳມະການແກ້ໄຂຂໍ້ຂັດແຍ້ງ

### ມາດຕາ 63 ຄະນະກຳມະການແກ້ໄຂຂໍ້ຂັດແຍ້ງ

1. ຂໍ້ຂັດແຍ້ງໃນ ສຕລ ຫຼື ຂໍ້ຂັດແຍ້ງທີ່ສົ່ງຜົນຕໍ່ ສຕລ, ສະມາຊິກ, ສະໂມສອນ, ນັກກິລາ ແລະ ເຈົ້າໜ້າທີ່ຕ່າງໆ ຂອງ ສຕລ ແມ່ນບໍ່ສາມາດສົ່ງຟ້ອງໄປຫາ ສານທົ່ວໄປ ຂອງຊາດໃດຊາດໜຶ່ງ, ເວັ້ນເສຍແຕ່ກໍລະນີທີ່ລະບຸໄວ້ໃນລະບຽບຂອງ FIFA, AFC, ກົດລະບຽບສະບັບນີ້ ຫຼື ຂໍ້ກຳນົດທາງ ກົດໝາຍທົ່ວໄປທີ່ໄດ້ກຳນົດໄວ້ສະເພາະ.

2. ຂໍ້ຂັດແຍ້ງຕ່າງໆທີ່ກຳນົດໄວ້ຢູ່ໃນ ວັກທີ 1 ຕ້ອງນຳໄປແກ້ໄຂດ້ວຍ ຄະນະກຳມະການອະນຸຍາໂຕຕຸລາການ ທີ່ ຖືກຮັບຮອງ ໂດຍ ສຕລ, FIFA, AFC ຫຼື ສານກິລາໂລກ (CAS) ຢູ່ ເມືອງ ໂລຊານ, ປະເທດສະວິດເຊີແລນ.

### ມາດຕາ 64 ວ່າດ້ວຍເຂດອຳນາດ

1. ຂໍ້ຂັດແຍ້ງຕ່າງໆກ່ອນທີ່ຈະນຳໄປສູ່ ຄະນະກຳມະການອະນຸຍາໂຕຕຸລາການ ກໍ່ຕໍ່ເມື່ອ ຂໍ້ຂັດແຍ້ງນັ້ນໆບໍ່ສາມາດໄກ່ເກ່ຍໄດ້ ຢູ່ພາຍໃນຂອງ ສຕລ.

2. ສຕລ ມີອຳນາດໃນການແກ້ໄຂຂໍ້ຂັດແຍ່ງ ພາຍໃນ ເຊັ່ນ: ຂໍ້ຂັດແຍ່ງ ລະຫວ່າງສະມາຊິກທີ່ຂຶ້ນກັບ ສຕລ. ສ່ວນ FIFA ແລະ AFC ມີອຳນາດໃນການແກ້ໄຂຂໍ້ຂັດແຍ່ງລະຫວ່າງປະເທດ ເຊັ່ນ: ຂໍ້ຂັດແຍ່ງລະຫວ່າງ ສະຫະພັນບານເຕະແຫ່ງຊາດລາວ ກັບ ສະຫະພັນບານເຕະແຫ່ງຊາດອື່ນ.

### ມາດຕາ 65 ສານອະນຸຍາໂຕຕຸລາການເພື່ອການກິລາໂລກ (Court of Arbitration for Sport (CAS))

1. ຕາມກົດລະບຽບ ຂອງ FIFA, ການຂໍອຸທອນ ຕໍ່ຄຳຕັດສິນຂອງ FIFA, AFC ຫຼື ສຕລ ຕ້ອງໄດ້ຮັບການພິຈາລະນາໂດຍ ສານອະນຸຍາໂຕຕຸລາການເພື່ອການກິລາໂລກ (CAS) ໃນເມືອງ ໂລຊານ, ປະເທດສະວິດເຊີແລນ. ເຖິງຢ່າງໃດກໍ່ຕາມ ສານອະນຸຍາໂຕຕຸລາການເພື່ອການກິລາໂລກ ຈະບໍ່ພິຈາລະນາຄຳຮ້ອງຂໍອຸທອນກ່ຽວກັບ ການລະເມີດກະຕິກາກິລາບານເຕະ (Laws of the Game) ຈາກສະຫະພັນບານເຕະໃດໆ.

2. ສຕລ ຕ້ອງ ຮັບປະກັນ ແລະ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຮູບການລົງວິໄນ ຕາມຄໍາຕັດສິນ ຂອງ ສຕລ, FIFA, AFC, AFF ແລະ ສານອະນຸຍາໂຕຕຸລາການເພື່ອການກິລາໂລກ.

## ພາກທີ VIII

## ວ່າດ້ວຍການເງິນ

### ມາດຕາ 66 ວ່າດ້ວຍການກຳນົດປີການບັນຊີ

1. ການກຳນົດປີການບັນຊີ ຂອງ ສຕລ ແມ່ນ ໜຶ່ງ (1) ປີ ໂດຍເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດລົງໃນວັນທີ 31 ທັນວາຂອງທຸກໆປີ.

2. ສຕລ ມີໜ້າທີ່ຮັບຜິດຊອບບໍລິຫານ ລາຍຮັບຈາກ FIFA, AFC, AFF ໃຫ້ສົມດູນກັບລາຍຈ່າຍ ເຊິ່ງຈະຕ້ອງໃຊ້ຈ່າຍໃຫ້ຄົບຖ້ວນ ຕາມລາຍຮັບຂອງແຕ່ລະປີ; ພ້ອມກັນນັ້ນ ສຕລ ຍັງຕ້ອງຮັບປະກັນການສະສົມເງິນລາຍຮັບຈາກຜູ້ອຸປະຖຳ ໃຫ້ມີເງິນສຳຮອງສະເໝີ.

3. ເລຂາທິການ ສຕລ ມີໜ້າທີ່ຮັບຜິດຊອບເກັບກຳຂໍ້ມູນ ແລະ ສັງລວມບັນຊີລາຍຈ່າຍຕ່າງໆ ແຕ່ວັນທີ 1 ມັງກອນ ຮອດວັນທີ 31 ທັນວາ ຂອງແຕ່ລະປີ ໂດຍປະສານສົມທົບກັບພະແນກການເງິນ ສຕລ.

### ມາດຕາ 67 ວ່າດ້ວຍລາຍຮັບ

ລາຍຮັບຂອງ ສຕລ ແມ່ນໄດ້ມາຈາກ:

ກ) ເງິນສະໜັບສະໜູນປະຈຳປີ ຈາກ FIFA, AFC ແລະ AFF;

ຂ) ຄ່າທຳນຽມປະຈຳປີ ຂອງສະມາຊິກ ສຕລ;

ຄ) ລາຍຮັບທີ່ໄດ້ຮັບມາຈາກການຕະຫຼາດ ແລະ ສິດທິຕ່າງໆ ຂອງ ສຕລ;

ງ) ຄ່າປັບໄໝຕ່າງໆ;

ຈ) ແລະ ອື່ນໆ.

### ມາດຕາ 68 ວ່າດ້ວຍລາຍຈ່າຍ

ລາຍຈ່າຍ ຂອງ ສຕລ ມີດັ່ງນີ້:

ກ. ລາຍຈ່າຍທີ່ກຳນົດໄວ້ໃນງົບປະມານປະຈຳປີ;

ຂ. ລາຍຈ່າຍອື່ນໆ ທີ່ຮັບຮອງໂດຍ ກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ຫຼື ສະໄໝວິສາມັນ;

ຄ. ລາຍຈ່າຍອື່ນໆ ທີ່ຄະນະບໍລິຫານງານ ສຕລ ມີສິດນໍາໃຊ້ພາຍໃນຂອບເຂດອໍານາດຂອງຕົນ.

## ມາດຕາ 69 ວ່າດ້ວຍຜູ້ກວດສອບບັນຊີອິດສະຫຼະ

ຜູ້ກວດສອບບັນຊີອິດສະຫຼະ ແມ່ນຖືກຮັບຮອງ ໂດຍກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ແລະ ມີອາຍຸການ ສອງ (2) ປີ ເຊິ່ງສາມາດຕໍ່ໄປໄດ້ອີກ ສອງ (2) ປີ. ຜູ້ກ່ຽວມີໜ້າທີ່ກວດສອບບັນຊີປະຈໍາປີ ທີ່ອະນຸກໍາມະການ ການເງິນ ໄດ້ຮັບຮອງເອົາ ຕາມຫຼັກການບັນຊີ ທີ່ຖືກຕ້ອງ, ພ້ອມກັນນັ້ນ ຜູ້ກ່ຽວກໍ່ຕ້ອງນໍາເອົາບົດກວດສອບດັ່ງກ່າວໄປລາຍງານ ຕໍ່ກອງປະຊຸມໃຫຍ່ ສຕລ.

## ມາດຕາ 70 ວ່າດ້ວຍຄ່າທໍານຽມ ຂອງການເປັນສະມາຊິກ ສຕລ

1. ສະມາຊິກ ສຕລ ຕ້ອງໄດ້ຊໍາລະຄ່າທໍານຽມ ຂອງການເປັນສະມາຊິກ ກ່ອນວັນທີ ວັນທີ 31 ມັງກອນ. ສໍາລັບສະມາຊິກໃໝ່ ຕ້ອງຊໍາລະພາຍໃນ ສາມສິບ (30) ວັນ ຫລັງຈາກ ວັນປິດກອງປະຊຸມໃຫຍ່ ສຕລ ສະໄໝສາມັນ.

2. ກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ຕ້ອງກໍານົດຄ່າທໍານຽມສະມາຊິກ ປະຈໍາປີ ໃນທຸກໆ ສອງ (2) ປີ ຕາມການສະເໜີຂອງ ຄະນະບໍລິຫານງານ ສຕລ.

3. ສະມາຊິກ ສຕລ ທີ່ບໍ່ຊໍາລະຄ່າທໍານຽມ ຕາມກໍານົດເວລາ ແມ່ນບໍ່ສາມາດເຂົ້າຮ່ວມລາຍການແຂ່ງຂັນທີ່ຈັດຂຶ້ນໂດຍ ສຕລ.

## ມາດຕາ 71 ວ່າດ້ວຍການຫັກເງິນສະໜັບສະໜູນ

ສຕລ ມີສິດຫັກເງິນສະໜັບສະໜູນຂອງຕົນ ໃຫ້ບັນດາສະມາຊິກໄວ້ສ່ວນໃດສ່ວນໜຶ່ງ ເພື່ອແຮໄວ້ຊໍາລະສະສາງໜີ້ຕ່າງໆທີ່ບັນດາສະມາຊິກ ຕິດຄ້າງນໍາ ສຕລ. ພາຍຫຼັງຊໍາລະສະສາງຄືນຖ້ວນແລ້ວເງິນສ່ວນທີ່ເຫຼືອນັ້ນ ຕ້ອງສົ່ງຄືນໃຫ້ສະມາຊິກ. ໃນກໍລະນີເງິນທີ່ຫັກໄວ້ ຫາກບໍ່ພຽງພໍກັບການຊໍາລະສະສາງໜີ້ຕ່າງໆ ແມ່ນສະມາຊິກທີ່ກ່ຽວຂ້ອງ ຕ້ອງປະກອບຕື່ມໃຫ້ຄືນຖ້ວນ.

### ມາດຕາ 72 ວ່າດ້ວຍຄ່າທຳນຽມໃນການເຂົ້າຮ່ວມການແຂ່ງຂັນ

ສຕລ ມີສິດເກັບຄ່າທຳນຽມຈາກສະມາຊິກ ໃນການເຂົ້າຮ່ວມໃນລາຍການແຂ່ງຂັນໃດໜຶ່ງຂອງ ສຕລ.



# ພາກທີ IX

## ວ່າດ້ວຍການແຂ່ງຂັນ, ສິດທິ ແລະ ຜົນປະໂຫຍດຈາກລາຍການແຂ່ງຂັນ ແລະ ກິດຈະກຳຕ່າງໆ

### ມາດຕາ 73 ວ່າດ້ວຍການແຂ່ງຂັນ

1. ສຕລ ມີໜ້າທີ່ຈັດການແຂ່ງຂັນ ແລະ ຮັບຮອງເອົາຂໍ້ສະເໜີການຈັດການແຂ່ງຂັນກິລາບານເຕະຂອງບັນດາສະມາຊິກ ສຕລ ໃນຂອບເຂດທົ່ວປະເທດ ດັ່ງລຸ່ມນີ້:

   ກ) ການແຂ່ງຂັນໃນລະດັບອາຊີບ;

   ຂ) ການແຂ່ງຂັນໃນລະດັບສະໝັກຫຼິ້ນ;

   ຄ) ການແຂ່ງຂັນເຍົາວະຊົນ;

   ງ) ການແຂ່ງຂັນກິລາບານເຕະຍິງ;

   ຈ) ການແຂ່ງຂັນກິລາບານເຕະຟຸດຊໍ;

   ສ) ການແຂ່ງຂັນກິລາບານເຕະຫາດຊາຍ.

### ມາດຕາ 74 ວ່າດ້ວຍການອອກໃບອະນຸຍາດສະໂມສອນ (Club Licensing)

ຄະນະບໍລິຫານງານ ຂອງ ສຕລ ຕ້ອງວາງກົດລະບຽບ ກ່ຽວກັບການອອກໃບອະນຸຍາດສະໂມສອນ ເພື່ອຄຸ້ມຄອງບັນດາສະມາຊິກ ທີ່ເຂົ້າຮ່ວມໃນການແຂ່ງຂັນ ຂອງ ສຕລ ຕາມເງື່ອນໄຂທີ່ AFC ກຳນົດຂຶ້ນ ເຊິ່ງອີງຕາມກົດລະບຽບການອອກໃບອະນຸຍາດຂອງ FIFA.

## ມາດຕາ 75 ວ່າດ້ວຍສິດທິ ແລະ ຜົນປະໂຫຍດຈາກລາຍການແຂ່ງຂັນ

1. ສຕລ ແລະ ບັນດາສະມາຊິກຂອງຕົນ ແມ່ນມີສິດທິໃນການອະນຸຍາດລາຍການແຂ່ງຂັນກິລາບານເຕະທັງໝົດ ແລະ ມີສິດທິໃນການຄຸ້ມຄອງຜົນປະໂຫຍດຈາກລາຍການແຂ່ງຂັນ ແລະ ກິດຈະກຳຕ່າງໆ ພາຍໃຕ້ຂອບເຂດອຳນາດຂອງຕົນ ໂດຍບໍ່ມີຂໍ້ຈຳກັດ. ສິດທິດັ່ງກ່າວນີ້ ແມ່ນລວມເອົາສິດທິທາງດ້ານ ລາຍຮັບຕ່າງໆທຸກປະເພດ, ສິດໃນການບັນທຶກພາບ ແລະ ສຽງ, ສິດໃນການເຜີຍແຜ່ ແລະ ການອອກອາກາດ, ສິດໃນການໃຊ້ສື່ຫຼາຍປະເພດ, ສິດທາງດ້ານການຕະຫຼາດ, ການໂຄສະນາ, ສິດທາງດ້ານສັນຍາລັກ ແລະ ລິຂະສິດ ຈາກລາຍການແຂ່ງຂັນທັງໝົດ.

2. ຄະນະບໍລິຫານງານ ສຕລ ເປັນຜູ້ຕັດສິນຂອບເຂດການນຳໃຊ້ສິດທິດັ່ງກ່າວ ແລະ ຮ່າງລະບຽບການສະເພາະ.

## ມາດຕາ 76 ວ່າດ້ວຍການອະນຸຍາດກິດຈະກຳຕ່າງໆ

ສຕລ ແລະ ບັນດາສະມາຊິກຂອງຕົນ ມີສິດອອກອະນຸຍາດໃຫ້ບຸກຄົນ ແລະ ນິຕິບຸກຄົນ ໃນການເຜີຍແຜ່ພາບ ແລະ ສຽງ ກໍ່ຄືຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບການແຂ່ງຂັນກິລາບານເຕະ ແລະ ກິດຈະກຳອື່ນໆ ສຕລ ແລະ ບັນດາສະມາຊິກຂອງຕົນ ທີ່ຈັດຂຶ້ນ.

## ພາກທີ X

## ວ່າດ້ວຍການແຂ່ງຂັນລະຫວ່າງປະເທດ ລະດັບທີມຊາດ ແລະ ລະດັບສະໂມສອນ

### ມາດຕາ 77 ວ່າດ້ວຍການແຂ່ງຂັນລະຫວ່າງປະເທດ ລະດັບທີມຊາດ ແລະ ລະດັບສະໂມສອນ

1. ການແຂ່ງຂັນລະຫວ່າງປະເທດ ລະດັບທີມຊາດ ແລະ ລະດັບສະໂມສອນ ແມ່ນຈັດຂຶ້ນ ພາຍໃຕ້ຄວາມຮັບຜິດຊອບຂອງແຕ່ລະເຈົ້າພາບທີ່ຕ່າງກັນເຊັ່ນ: FIFA , AFC, AFF ຫຼື ລະຫວ່າງສະຫະພັນບານເຕະ.
2. ສຕລ ຕ້ອງປະຕິບັດໃຫ້ສອດຄ່ອງ ກັບປະຕິທິນຂອງການແຂ່ງຂັນ ທີ່ກຳນົດໂດຍ FIFA, AFC ແລະ AFF.

### ມາດຕາ 78 ວ່າດ້ວຍຂອບເຂດການພົວພັນ

ສຕລ, ສະມາຊິກ ສຕລ, ນັກກິລາ ແລະ ເຈົ້າໜ້າທີ່ເປັນຕົວແທນຂອງ ສຕລ ແມ່ນບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນລາຍການແຂ່ງຂັນ ຫຼື ພົວພັນກັບສະມາຄົມ ຫຼື ສະຫະພັນ ທີ່ບໍ່ເປັນສະມາຊິກ ຂອງ FIFA, AFC ແລະ ທີ່ FIFA, AFC ບໍ່ຮັບຮອງເອົາ.

### ມາດຕາ 79 ວ່າດ້ວຍການອະນຸຍາດເຂົ້າຮ່ວມການແຂ່ງຂັນ

ສະໂມສອນທີ່ເປັນສະມາຊິກ ຂອງ ສຕລ ສາມາດເຂົ້າຮ່ວມການແຂ່ງຂັນກິລາບານເຕະ ທີ່ຈັດຂຶ້ນໂດຍສະມາຊິກຂອງ FIFA, AFC ແລະ AFF ໄດ້ ໂດຍໄດ້ຮັບອະນຸຍາດຈາກ ສຕລ.

## ພາກທີ XI

## ວ່າດ້ວຍບົດບັນຍັດສຸດທ້າຍ

### ມາດຕາ 80 ວ່າດ້ວຍເຫດສຸດວິໄສ

ຄະນະບໍລິຫານງານ ສຕລ ມີສິດຕັດສິນ ໃນທຸກໆກໍລະນີຂອງເຫດສຸດວິໄສ ແລະ ບັນຫາຕ່າງໆທີ່ບໍ່ໄດ້ກຳນົດໄວ້ໃນກົດລະບຽບສະບັບນີ້. ຄຳຕັດສິນດັ່ງກ່າວ ຕ້ອງສອດຄ່ອງກັບກົດໝາຍ ແລະ ຍຸຕິທຳ ທັງຄຳນຶງເຖິງກົດລະບຽບຂອງ FIFA ແລະ AFC.

### ມາດຕາ 81 ວ່າດ້ວຍຜົນສັກສິດ ແລະ ຜົນບັງຄັບໃຊ້

ກົດລະບຽບສະບັບນີ້ ຖືກຮັບຮອງເອົາ ໂດຍກອງປະຊຸມໃຫຍ່ ສຕລ ສະໄໝສາມັນ ທີ່ຈັດຂຶ້ນຢູ່ ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 19 ທັນວາ 2020 ແລະ ມີຜົນສັກສິດ ນັບແຕ່ມື້ປະທານ ສຕລ ລົງລາຍເຊັນເປັນຕົ້ນໄປ.

ກົດລະບຽບສະບັບນີ້ ປ່ຽນແທນກົດລະບຽບສະບັບ ລົງວັນທີ 14 ທັນວາ 2019 ແລະ ມີຜົນບັງຄັບໃຊ້ພາຍຫຼັງປະທານ ສຕລ ລົງລາຍເຊັນ ສິບຫ້າ (15) ວັນ ເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, 19 ທັນວາ 2020

| ປະທານ ສຕລ | ເລຂາທິການ ສຕລ |
|---|---|
| ວິເພັດ ສີຫາຈັກ | ກັນຍາ ແກ້ວມະນີ |